ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 024 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28/1/2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ( ສະບັບປັບປຸງ )**

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້ 01;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 020/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 15 ມັງກອນ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

**ຈູມມາລີ ໄຊຍະສອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 020 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 16 ທັນວາ 2015

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2015

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 71 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2015

# ກົດໝາຍ
# ວ່າດ້ວຍ ງົບປະມານແຫ່ງລັດ ( ສະບັບປັບປຸງ )

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການສ້າງແຜນ, ການຈັດຕັ້ງປະຕິບັດ, ການສະຫຼຸບ ແລະ ການກວດສອບ ງົບປະມານແຫ່ງລັດ ເພື່ອຄຸ້ມຄອງການເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ປະຕິບັດລາຍຈ່າຍງົບປະມານ ໃຫ້ໂປ່ງໃສ, ປະຢັດມັດທະຍັດ, ມີປະສິດທິຜົນ, ເອກະພາບໃນຂອບເຂດທົ່ວປະເທດ, ຍົກສູງຄວາມຮັບຜິດຊອບຂອງອົງການລັດທຸກຂັ້ນ, ເພີ່ມຖານແຫຼ່ງລາຍຮັບ, ສ້າງຄວາມເຂັ້ມແຂງທາງດ້ານການເງິນດ້ວຍຕົນເອງເທື່ອລະກ້າວ ເຮັດໃຫ້ການເງິນແຫ່ງຊາດ ມີສະຖຽນລະພາບ ແລະ ເຊື່ອມໂຍງເຂົ້າລະບົບການເງິນສາກົນ ແນໃສ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຕໍ່ເນື່ອງ ແລະ ຍືນຍົງ.

**ມາດຕາ 2 ງົບປະມານແຫ່ງລັດ**

ງົບປະມານແຫ່ງລັດ ແມ່ນ ການຄາດຄະເນແຜນລາຍຮັບ-ລາຍຈ່າຍຂອງລັດ ຊຶ່ງໄດ້ຮັບຮອງຈາກສະພາແຫ່ງຊາດໃນແຕ່ລະປີ.

ງົບປະມານແຫ່ງລັດ ເປັນໃຈກາງຂອງລະບົບການເງິນແຫ່ງຊາດ, ເປັນເຄື່ອງມືຄຸ້ມຄອງ, ດັດສົມເສດຖະກິດມະຫາພາກ ເພື່ອຮັບປະກັນໃຫ້ເສດຖະກິດ-ສັງຄົມມີການພັດທະນາ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. ການດຸນດ່ຽງງົບປະມານແຫ່ງລັດ ໝາຍເຖິງ ການສົມທຽບລະຫວ່າງ ຕົວເລກລວມຍອດລາຍຮັບ ກັບ ຕົວເລກລວມຍອດລາຍຈ່າຍງົບປະມານແຫ່ງລັດ ໃນໄລຍະໃດໜຶ່ງ ເມື່ອສົມທຽບກັນແລ້ວຈະເຫັນວ່າຖານະງົບປະມານເກີດຂຶ້ນ ໃນສາມກໍລະນີ ດັ່ງນີ້:

- ງົບປະມານສົມດຸນ ໝາຍເຖິງ ງົບປະມານທີ່ມີຕົວເລກ ລວມຍອດລາຍຮັບ ເທົ່າກັບຕົວເລກລວມຍອດລາຍຈ່າຍ;

- ງົບປະມານເກີນດຸນ ໝາຍເຖິງ ງົບປະມານທີ່ມີຕົວເລກ ລວມຍອດລາຍຮັບ ຫຼາຍກວ່າຕົວເລກລວມຍອດລາຍຈ່າຍ;

- ງົບປະມານຂາດດຸນ ໝາຍເຖິງ ງົບປະມານ ທີ່ມີຕົວເລກ ລວມຍອດລາຍຮັບ ໜ້ອຍກວ່າ ຕົວເລກລວມຍອດລາຍຈ່າຍ.

2. **ການຊ່ວຍໜູນເພື່ອດຸນດ່ຽງງົບປະມານ** ໝາຍເຖິງ ການຊ່ວຍໜູນຈາກງົບປະມານແຫ່ງລັດຂັ້ນສູນກາງ ໃຫ້ງົບປະມານທ້ອງຖິ່ນ ທີ່ນອນໃນແຜນງົບປະມານແຫ່ງລັດປະຈຳປີ;

3. **ການຊ່ວຍໜູນງົບປະມານທີ່ມີເປົ້າໝາຍສະເພາະ** ໝາຍເຖິງ ການຊ່ວຍໜູນງົບປະມານ ຈາກສູນກາງ ໃຫ້ທ້ອງຖິ່ນ ເພື່ອປະຕິບັດແຜນງານ, ໂຄງການລະດັບຊາດ ທີ່ປະຕິບັດຢູ່ທ້ອງຖິ່ນ ເປັນຕົ້ນ ແກ້ໄຂຜົນກະທົບຈາກໄພພິບັດ, ພະຍາດລະບາດຮຸນແຮງ, ການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ແລະ ອື່ນໆ;

4. **ງົບປະມານໄລຍະກາງ** ໝາຍເຖິງ ການຄາດຄະເນແຜນງົບປະມານແຫ່ງລັດ ໃນໄລຍະ ສາມປີ ທີ່ກຳນົດແຜນລະອຽດໜຶ່ງປີ ແລະ ກຳນົດຂອບງົບປະມານສອງປີຖັດໄປ;

5. **ການດັດແກ້ງົບປະມານແຫ່ງລັດ** ໝາຍເຖິງ ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ໃນກໍລະນີທີ່ມີລາຍຮັບເກີນ ຫຼື ຫຼຸດແຜນງົບປະມານ; ການປ່ຽນແປງນະໂຍບາຍ ຫຼື ມີເຫດການໃດໜຶ່ງເກີດຂຶ້ນທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບຕໍ່ລາຍຮັບ ແລະລາຍຈ່າຍງົບປະມານແຫ່ງລັດປະຈຳປີ;

6. **ຫົວໜ່ວຍງົບປະມານ** ໝາຍເຖິງ ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ອົງການຈັດຕັ້ງຂອງລັດຂັ້ນທ້ອງຖິ່ນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບງົບປະມານແຫ່ງລັດ;

7. **ຜູ້ສັ່ງການເອກ** ໝາຍເຖິງ ລັດຖະມົນຕີກະຊວງການເງິນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານ ແລະ ການເງິນແຫ່ງລັດ;

8. **ຜູ້ສັ່ງການ** ໝາຍເຖິງ ລັດຖະມົນຕີຂອງບັນດາກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊຶ່ງເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານ ໃນຂະແໜງການ ແລະ ທ້ອງຖິ່ນ ຂອງຕົນ ຕາມການມອບໝາຍຂອງຜູ້ສັ່ງການເອກ;

9. **ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ** ໝາຍເຖິງ ຮ່ວງເງິນທີ່ກຳນົດໃນແຜນລາຍຈ່າຍງົບປະມານແຫ່ງລັດປະຈຳປີ ເພື່ອນຳໃຊ້ເຂົ້າໃນຄວາມຕ້ອງການບັງເອີນ ແລະ ຮີບດ່ວນ ເປັນຕົ້ນ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໄພທຳມະຊາດ, ພະຍາດລະບາດ;

10. **ຄັງສະສົມແຫ່ງລັດ** ໝາຍເຖິງ ການສະສົມເງິນ, ວັດຖຸ, ສິນຄ້າສະສົມແຫ່ງລັດ ຊຶ່ງລັດເປັນຜູ້ຄຸ້ມຄອງ, ຮັກສາ ເພື່ອຊຸກຍູ້ການພັດທະນາ ແລະ ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດຂອງຊາດ;

11. **ຮ່ວງສະສົມແຫ່ງລັດ** ໝາຍເຖິງ ຮ່ວງເງິນຂອງລັດຖະບານ ທີ່ກຳນົດໃນແຜນລາຍຈ່າຍງົບປະມານແຫ່ງລັດປະຈຳປີ ຊຶ່ງຄິດໄລ່ຈາກຍອດລາຍຮັບພາຍໃນ ໂດຍບໍ່ລວມລາຍຮັບຈາກຊັບພະຍາກອນທຳມະຊາດ; ລາຍຮັບເກີນແຜນງົບປະມານປະຈຳປີ ແລະ ລາຍຮັບຈາກຊັບພະຍາກອນທຳມະຊາດ ໃນຂອບເຂດທີ່ລັດຖະບານຕົກລົງ ສະສົມໄວ້ໃນແຕ່ລະປີ;

12. **ກອງທຶນຂອງລັດ** ໝາຍເຖິງ ການຈັດຕັ້ງໜຶ່ງ ທີ່ລັດຖະບານອະນຸຍາດໃຫ້ສ້າງຕັ້ງຂຶ້ນ ເພື່ອປະຕິບັດງົບປະມານສະເພາະເປົ້າໝາຍໃດໜຶ່ງ ຕາມລະບຽບການ;

13. **ວິໄນການເງິນ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການເງິນ ຢ່າງເຂັ້ມງວດ;

14. ກຳນົດໝາຍການຈັດສັນງົບປະມານແຫ່ງລັດ ໝາຍເຖິງ ການກຳນົດວົງເງິນ ທີ່ຈະຈັດສັນໃຫ້ຂະແໜງການ ແລະ ທ້ອງຖິ່ນ ໂດຍອີງຕາມລັກສະນະ, ຄວາມຮັບຜິດຊອບ, ຈຸດພິເສດ, ທີ່ຕັ້ງພູມສາດ, ຈຳນວນພົນ, ເນື້ອທີ່ ແລະ ຄວາມຮຽກຮ້ອງຕ້ອງການໃນການພັດທະນາ;

15. ພະນັກງານການເງິນ ໝາຍເຖິງ ພະນັກງານຂອງຂະແໜງການການເງິນ ແລະ ພະນັກງານການເງິນຂອງຂະແໜງການອື່ນ.

## ມາດຕາ 4 (ປັບປຸງ) ນະໂຍບາຍກ່ຽວກັບງົບປະມານແຫ່ງລັດ

ລັດ ວາງນະໂຍບາຍກ່ຽວກັບງົບປະມານແຫ່ງລັດ ດ້ວຍການຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຂອງແຫຼ່ງລາຍຮັບພາຍໃນ, ຮັບປະກັນລາຍຈ່າຍ ແລະ ມີສ່ວນສະສົມແຮໄວ້, ປະຕິບັດການຮ່ວມມືກັບຕ່າງປະເທດຢ່າງເປັນເຈົ້າການ ເພື່ອຮັກສາສະຖຽນລະພາບທາງດ້ານການເງິນຂອງປະເທດ, ປະຕິບັດລາຍຈ່າຍເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢ່າງມີປະສິດທິຜົນ ເປັນຕົ້ນ ການພັດທະນາຊັບພະຍາກອນມະນຸດ, ການບໍລິຫານຂອງກົງຈັກລັດ, ການກໍ່ສ້າງພື້ນຖານໂຄງລ່າງ, ການຄົ້ນຄວ້າວິທະຍາສາດ, ການນຳໃຊ້ ແລະ ພັດທະນາເຕັກໂນໂລຊີ ເພື່ອສົ່ງເສີມການຜະລິດເປັນສິນຄ້າ, ການບໍລິການຕອບສະໜອງການຊົມໃຊ້ພາຍໃນ ແລະ ການສົ່ງອອກ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ລຶບລ້າງຄວາມທຸກຍາກ, ຮັບປະກັນການຄຸ້ມຄອງງົບປະມານແຫ່ງລັດ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ແນໃສ່ເຮັດໃຫ້ປະເທດຊາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງເທື່ອລະກ້າວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## ມາດຕາ 5 ພັນທະຂອງບຸກຄົນ ແລະ ການຈັດຕັ້ງ ຕໍ່ງົບປະມານແຫ່ງລັດ

ບຸກຄົນ ແລະ ການຈັດຕັ້ງ ຕ້ອງປະຕິບັດພັນທະ ໃນການເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ມອບເຂົ້າງົບປະມານຂອງລັດ ຕາມກົດໝາຍ ແລະ ລະບຽບການ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

## ມາດຕາ 6 (ປັບປຸງ) ຫຼັກການພື້ນຖານຂອງງົບປະມານແຫ່ງລັດ

ຫຼັກການພື້ນຖານ ຂອງງົບປະມານແຫ່ງລັດ ມີ ດັ່ງນີ້:

1. ການລວມສູນ ແລະ ຄວາມຄົບຖ້ວນ: ທຸກແຫຼ່ງລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ຕ້ອງໄດ້ລວມສູນຢ່າງຄົບຖ້ວນດ້ວຍການຈົດເຂົ້າໃນງົບປະມານແຫ່ງລັດ ໂດຍຜ່ານລະບົບບັນຊີລວມສູນຄັງເງິນແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບທາງດ້ານກົດໝາຍອັນດຽວໃນຂອບເຂດທົ່ວປະເທດ. ບໍ່ອະນຸຍາດໃຫ້ເອົາລາຍຮັບຮັກສາໄວ້ຢູ່ນອກລະບົບງົບປະມານ ແລະ ສ້າງຄັງໂດຍບໍ່ໄດ້ຮັບອະນຸຍາດ;

2. ຄວາມໝັ້ນຄົງຂອງງົບປະມານ: ການສ້າງແຜນງົບປະມານແຫ່ງລັດປະຈຳປີ ຕ້ອງເລີ່ມຈາກຄວາມສາມາດຕົວຈິງຂອງເສດຖະກິດແຫ່ງຊາດ ຮັບປະກັນການດຸນດ່ຽງເສດຖະກິດມະຫາພາກ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ; ການສ້າງແຜນ ແລະ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ຕ້ອງເປັນສະກຸນເງິນກີບ;

3. ຄວາມເປັນເອກະພາບ: ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີຕ້ອງໃຫ້ຖືກຕ້ອງ ຕາມແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ, ບໍ່ອະນຸຍາດໃຫ້ຈ່າຍນອກແຜນ, ລົງທຶນກ່ອນ ແລະ ຈ່າຍເກີນແຜນງົບປະມານ;

4. ການຂາດດຸນງົບປະມານແຫ່ງລັດ: ການຂາດດຸນ ໃຫ້ຂາດດຸນສະເພາະງົບປະມານແຫ່ງລັດຂັ້ນສູນກາງ, ບໍ່ອະນຸຍາດໃຫ້ງົບປະມານທ້ອງຖິ່ນຂາດດຸນ, ສ່ວນຈໍານວນຜິດດ່ຽງ ລະຫວ່າງແຜນລາຍຮັບກັບແຜນລາຍຈ່າຍຂອງທ້ອງຖິ່ນນັ້ນ ງົບປະມານແຫ່ງລັດຂັ້ນສູນກາງຈະຊ່ວຍໜູນໃຫ້;

5. ການດຸນດ່ຽງງົບປະມານແຫ່ງລັດ: ການດຸນດ່ຽງລະຫວ່າງລວມຍອດລາຍຮັບກັບລວມຍອດລາຍຈ່າຍ. ໃນກໍລະນີທີ່ມີການຂາດດຸນງົບປະມານແຫ່ງລັດ ແມ່ນອະນຸຍາດໃຫ້ສະເພາະລາຍຈ່າຍລົງທຶນ ເພື່ອພັດທະນາເທົ່ານັ້ນ. ລະດັບການຂາດດຸນງົບປະມານ ແມ່ນສະພາແຫ່ງຊາດເປັນຜູ້ຕົກລົງ ບົນພື້ນຖານຄວາມຕ້ອງການ ແລະ ຄວາມສາມາດຂອງການເງິນແຫ່ງລັດ. ສ່ວນແຫຼ່ງເງິນເພື່ອມາດຸນດ່ຽງງົບປະມານແຫ່ງລັດນັ້ນ ໄດ້ມາຈາກເງິນກູ້ຢືມພາຍໃນ, ຕ່າງປະເທດ ແລະ ກູ້ຢືມຈາກຄັງສະສົມແຫ່ງລັດ;

6. ປະສິດທິຜົນ ແລະ ຄວາມສາມາດກວດສອບໄດ້: ຂໍ້ມູນງົບປະມານແຫ່ງລັດ ກ່ຽວກັບການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບ ຕ້ອງຮັບປະກັນຄວາມຊັດເຈນ, ໂປ່ງໃສ, ເປີດເຜີຍ ແລະ ຕ້ອງໄດ້ຜ່ານການກວດກາ, ກວດການ ແລະ ຢັ້ງຢືນ ຈາກອົງການກວດສອບແຫ່ງລັດ;

7. ການແບ່ງຄວາມຮັບຜິດຊອບ ກ່ຽວກັບລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດລະຫວ່າງສູນກາງ ແລະ ທ້ອງຖິ່ນ: ການຮັບປະກັນຫຼັກການລວມສູນປະຊາທິປະໄຕ, ການປະຕິບັດກົດໝາຍ ແລະ ລະບຽບການ ຕ້ອງໃຫ້ເຂັ້ມງວດ ແລະ ເປັນເອກະພາບ; ງົບປະມານສູນກາງ ກໍາແຫຼ່ງລາຍຮັບສ່ວນໃຫຍ່ເພື່ອປະຕິບັດລາຍຈ່າຍທີ່ມີຄວາມສໍາຄັນລະດັບຊາດ ແລະ ຊ່ວຍໜູນໃຫ້ທ້ອງຖິ່ນ;

8. ການຄຸ້ມຄອງລວມສູນຕາມສາຍຕັ້ງ: ວຽກງານວິຊາສະເພາະ, ວຽກງານຄຸ້ມຄອງພະນັກງານ ແລະ ງົບປະມານ ຂອງຂະແໜງພາສີ, ຂະແໜງສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ຕ້ອງຄຸ້ມຄອງລວມສູນຕາມສາຍຕັ້ງ;

9. ການຈັດສັນງົບປະມານແຫ່ງລັດ: ການຈັດສັນງົບປະມານແຫ່ງລັດ ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຕ້ອງປະຕິບັດຕາມກໍານົດໝາຍການຈັດສັນງົບປະມານ;

10. ຄວາມຮັບຜິດຊອບ: ການຈັດຕັ້ງຂອງລັດ ທີ່ມີການພົວພັນກັບງົບປະມານແຫ່ງລັດ ຕ້ອງມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ;

11. ຄວາມສະເໝີພາບບົດບາດຍິງ-ຊາຍ: ການສ້າງ ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຕ້ອງຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ.

### ມາດຕາ 7 (ປັບປຸງ) ປີງົບປະມານແຫ່ງລັດ

ປີງົບປະມານແຫ່ງລັດ ລວມມີ ສິບສອງ ເດືອນ, ເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດລົງ ໃນວັນທີ 31 ທັນວາ ຂອງປີດຽວກັນ.

### ມາດຕາ 8 (ປັບປຸງ) ການຈົດ ລາຍຮັບ-ລາຍຈ່າຍ ຂອງກອງທຶນຂອງລັດ

ລາຍຮັບ-ລາຍຈ່າຍ ຂອງກອງທຶນຂອງລັດ ຕ້ອງຈົດເຂົ້າໃນແຜນງົບປະມານແຫ່ງລັດປະຈໍາປີ, ຈັດຕັ້ງປະຕິບັດຢູ່ຄັງເງິນແຫ່ງຊາດ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍລາຍຈ່າຍ ຕາມລະບຽບການທີ່ລັດຖະບານອະນຸມັດ. ທຸກລາຍຮັບ-ລາຍຈ່າຍ ຂອງກອງທຶນຂອງລັດ ຕ້ອງຢູ່ພາຍໃຕ້ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຂອງຂະແໜງ ການທີ່ກ່ຽວຂ້ອງ ແລະ ຂອງຂະແໜງການການເງິນ.

ທຸກແຫຼ່ງລາຍຮັບ-ລາຍຈ່າຍ ຂອງກອງທຶນຂອງລັດ ຕ້ອງສັງລວມເປັນເອກະສານຊ້ອນທ້າຍຄັດຕິດກັບແຜນງົບປະມານແຫ່ງລັດປະຈໍາປີ. ພາຍຫຼັງສິ້ນສຸດການຈັດຕັ້ງປະຕິບັດປີງົບປະມານ ແຕ່ລະກອງທຶນຕ້ອງສະຫຼຸບບັນຊີ ລາຍຮັບ-ລາຍຈ່າຍ ປະຈໍາປີ ແລ້ວສົ່ງໃຫ້ ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ.

### ມາດຕາ 9 (ໃໝ່) ການແບ່ງຂັ້ນຫົວໜ່ວຍງົບປະມານ

ຫົວໜ່ວຍງົບປະມານ ແບ່ງອອກເປັນ ສອງຂັ້ນ ຄື ຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ແລະ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ.

1. ຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ແມ່ນ ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຢູ່ສູນກາງ ແລະ ອົງການຈັດຕັ້ງຂອງລັດຢູ່ແຂວງ, ນະຄອນຫຼວງ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານ ຕາມການມອບໝາຍຂອງຜູ້ສັ່ງການເອກ;

2. ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ແມ່ນ ການຈັດຕັ້ງຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ທີ່ຂຶ້ນກັບຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານ ຕາມການມອບໝາຍຂອງຜູ້ສັ່ງການ.

### ມາດຕາ 10 ຫົວໜ່ວຍງົບປະມານຂອງອົງການບໍລິຫານວິຊາການ

ຫົວໜ່ວຍງົບປະມານຂອງອົງການບໍລິຫານວິຊາການ ທີ່ຂຶ້ນກັບງົບປະມານແຫ່ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີລາຍຮັບເກັບຈາກການບໍລິການຂອງຂະແໜງວິຊາຊີບ ຕ້ອງຄິດໄລ່, ໄລ່ລຽງລາຍຮັບ, ລາຍຈ່າຍ, ສັງລວມເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີ ຂອງອົງການທີ່ກ່ຽວຂ້ອງ, ປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງຂອງ ຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການການເງິນ.

ສຳລັບ ລາຍຮັບ-ລາຍຈ່າຍ ຂອງອົງການບໍລິຫານວິຊາການ ກໍໃຫ້ປະຕິບັດຕາມມາດຕາ 8 ວັກ 2 ຂອງກົດໝາຍສະບັບນີ້.

### ມາດຕາ 11 (ປັບປຸງ) ການນຳໃຊ້ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ

ເງິນແຮລັດຖະບານ ແມ່ນ ນາຍົກລັດຖະມົນຕີ ເປັນຜູ້ຕົກລົງຈ່າຍ.

ເງິນແຮທ້ອງຖິ່ນ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຕົກລົງຈ່າຍ ແລະ ແບ່ງໃຫ້ເມືອງ, ເທດສະບານ, ນະຄອນ ຕາມການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ ໃຫ້ນຳໃຊ້ເຂົ້າໃນຄວາມຕ້ອງການບັງເອີນ ແລະ ຮີບດ່ວນ ເປັນຕົ້ນ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໄພທຳມະຊາດ, ພະຍາດລະບາດ. ໃນກໍລະນີທີ່ເງິນແຮດັ່ງກ່າວ ຫາກບໍ່ໄດ້ໃຊ້ຈ່າຍໃນປີນັ້ນ ຕ້ອງມອບເຂົ້າຄັງສະສົມແຫ່ງລັດ.

### ມາດຕາ 12 (ປັບປຸງ) ການນຳໃຊ້ຄັງສະສົມແຫ່ງລັດ

ຄັງສະສົມແຫ່ງລັດ ແມ່ນ ສະພາແຫ່ງຊາດ ເປັນຜູ້ຕົກລົງໃຫ້ຈ່າຍ ຕາມການສະເໜີຂອງລັດຖະບານ ເພື່ອຊຸກຍູ້ການພັດທະນາ ແລະ ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດຂອງຊາດ; ໃນກໍລະນີທີ່ຈຳເປັນຮີບດ່ວນ ນາຍົກລັດຖະມົນຕີ ກໍມີສິດສັ່ງຈ່າຍກ່ອນ ແລ້ວຕ້ອງລາຍງານ ແລະ ສະເໜີຂໍການຕົກລົງຈາກສະພາແຫ່ງຊາດ.

### ມາດຕາ 13 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ ແລະ ເຕັກໂນໂລຊີ ເພື່ອເຮັດໃຫ້ລະບົບການເງິນແຫ່ງຊາດ ມີຄວາມເຂັ້ມແຂງ ແລະ ທັນສະໄໝ, ຍາດແຍ່ງແຫຼ່ງທຶນ ແລະ ການເຂົ້າຮ່ວມຕະຫຼາດທຶນ.

# ພາກທີ II
# ໂຄງປະກອບຂອງງົບປະມານແຫ່ງລັດ

**ມາດຕາ 14 ໂຄງປະກອບຂອງງົບປະມານແຫ່ງລັດ**

ງົບປະມານແຫ່ງລັດ ປະກອບດ້ວຍ:

1. ລາຍຮັບງົບປະມານແຫ່ງລັດ;
2. ລາຍຈ່າຍງົບປະມານແຫ່ງລັດ;
3. ການດຸນດ່ຽງງົບປະມານແຫ່ງລັດ.

## ໝວດທີ 1
## ລາຍຮັບງົບປະມານແຫ່ງລັດ

**ມາດຕາ 15 (ປັບປຸງ) ລາຍຮັບງົບປະມານແຫ່ງລັດ**

ລາຍຮັບງົບປະມານແຫ່ງລັດ ມີ ສີ່ແຫຼ່ງ ຄື:

1. ລາຍຮັບຈາກພາສີ ແລະ ສ່ວຍສາອາກອນ;
2. ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ;
3. ລາຍຮັບຈາກການຊ່ວຍເຫຼືອລ້າ;
4. ລາຍຮັບຈາກການປະກອບສ່ວນຂອງສັງຄົມ.

**ມາດຕາ 16 (ໃໝ່) ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ**

ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ ປະກອບດ້ວຍ ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ ທາງກົງ ແລະ ທາງອ້ອມ.

ກ. ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ ທາງກົງ ມີ ດັ່ງນີ້:

1. ອາກອນກຳໄລ;
2. ອາກອນລາຍໄດ້;
3. ອາກອນມອບເໝົາ;
4. ອາກອນສິ່ງແວດລ້ອມ;
5. ຄ່າທຳນຽມ, ຄ່າບໍລິການວິຊາການ;
6. ລາຍຮັບອື່ນ.

ຂ. ລາຍຮັບຈາກ ພາສີ ແລະ ສ່ວຍສາອາກອນ ທາງອ້ອມ ມີ ດັ່ງນີ້:

1. ອາກອນມູນຄ່າເພີ່ມ;
2. ອາກອນຊົມໃຊ້;
3. ຄ່າພາກຫຼວງ;
4. ພາສີຂາອອກ-ຂາເຂົ້າ;
5. ລາຍຮັບອື່ນ.

**ມາດຕາ 17 (ໃໝ່) ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ**

ລາຍຮັບບໍ່ແມ່ນ ພາສີ ແລະ ສ່ວຍສາອາກອນ ມີ ດັ່ງນີ້:

1. ຄ່າເຊົ່າ;
2. ຄ່າສຳປະທານ;
3. ຄ່າບິນຜ່ານ;
4. ເງິນປັນຜົນ;
5. ຄ່າສຳຫຼວດ;
6. ດອກເບ້ຍເງິນກູ້ຢືມ;
7. ການປັບໃໝ, ການຂາຍ ເຄື່ອງຍຶດ ແລະ ເຄື່ອງຮິບ;
8. ລາຍຮັບອື່ນ.

**ມາດຕາ 18 (ປັບປຸງ) ລາຍຮັບຈາກການຊ່ວຍເຫຼືອລ້າ**

ລາຍຮັບຈາກການຊ່ວຍເຫຼືອລ້າ ລວມມີ ສອງແຫຼ່ງ ດ້ວຍຮູບການເປັນເງິນສົດ ຫຼື ວັດຖຸ ດັ່ງນີ້:

1. ລາຍຮັບຊ່ວຍເຫຼືອລ້າ ຈາກລັດຖະບານຕ່າງປະເທດ;
2. ລາຍຮັບຊ່ວຍເຫຼືອລ້າ ຈາກອົງການຈັດຕັ້ງສາກົນ.

**ມາດຕາ 19 (ໃໝ່) ລາຍຮັບຈາກການປະກອບສ່ວນຂອງສັງຄົມ**

ລາຍຮັບຈາກການປະກອບສ່ວນຂອງສັງຄົມ ມີ ດັ່ງນີ້:

1. ລາຍຮັບຈາກການປະກັນສັງຄົມ;
2. ລາຍຮັບຈາກການປະກອບສ່ວນຂອງສັງຄົມ;
3. ລາຍຮັບອື່ນ.

## ໝວດທີ 2
## ລາຍຈ່າຍງົບປະມານແຫ່ງລັດ

**ມາດຕາ 20 (ປັບປຸງ) ປະເພດລາຍຈ່າຍງົບປະມານແຫ່ງລັດ**

ການຈັດປະເພດລາຍຈ່າຍງົບປະມານແຫ່ງລັດ ຕາມການຈັດແບ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ລາຍຈ່າຍບໍລິຫານປົກກະຕິ;
2. ລາຍຈ່າຍການລົງທຶນຂອງລັດ.

**ມາດຕາ 21 (ປັບປຸງ) ລາຍຈ່າຍບໍລິຫານປົກກະຕິ**

ລາຍຈ່າຍບໍລິຫານປົກກະຕິ ມີ ລາຍຈ່າຍຮັບໃຊ້ກົງຈັກຂອງລັດ ແລະ ລາຍຈ່າຍທາງດ້ານການເງິນອື່ນ ທີ່ລັດຖະບານຮັບຜິດຊອບ.

ລາຍຈ່າຍຮັບໃຊ້ກົງຈັກຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1. ລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນຕ່າງໆ;
2. ເງິນນະໂຍບາຍ ແລະ ເງິນຊ່ວຍໜູນ;

3. ລາຍຈ່າຍບໍລິຫານ ແລະ ຊື້ໃໝ່ ຮັບໃຊ້ກິຈການລັດ;
4. ລາຍຈ່າຍດັດສົມ ແລະ ສິ່ງເສີມ;

ລາຍຈ່າຍທາງດ້ານການເງິນອື່ນທີ່ລັດຖະບານຮັບຜິດຊອບ ປະກອບດ້ວຍ:
1. ເງິນພັນທະບຳລຸງໃຫ້ອົງການສາກົນ;
2. ລາຍຈ່າຍດອກເບ້ຍ;
3. ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ;
4. ລາຍຈ່າຍຄ້າງຊຳລະປີຜ່ານມາ;
5. ລາຍຈ່າຍອື່ນ.

## ມາດຕາ 22 (ປັບປຸງ) ລາຍຈ່າຍການລົງທຶນຂອງລັດ

ລາຍຈ່າຍການລົງທຶນຂອງລັດ ແມ່ນ ການນຳໃຊ້ທຶນຈາກງົບປະມານແຫ່ງລັດ ລວມມີ ແຫຼ່ງທຶນພາຍໃນ, ການກູ້ຢືມ ແລະ ການຊ່ວຍເຫຼືອລ້າ ເຂົ້າໃນການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ຊື້, ລົງທຶນ ຫຼື ເຂົ້າຮຸ້ນນຳວິສາຫະກິດ, ລາຍຈ່າຍຊື້ຊັບສົມບັດຄົງທີ່ ທີ່ມີອາຍຸການນຳໃຊ້ເກີນໜຶ່ງປີຂຶ້ນໄປ.

## ມາດຕາ 23 ລາຍຈ່າຍງົບປະມານແຫ່ງລັດຕາມຂະແໜງການ, ແຜນງານ ແລະ ໂຄງການ

ນອກຈາກ ການຈັດແບ່ງລາຍຈ່າຍງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍສະບັບນີ້ແລ້ວ ລາຍຈ່າຍງົບປະມານແຫ່ງລັດ ຍັງຈັດແບ່ງຕາມຂະແໜງການ, ແຜນງານ ແລະ ໂຄງການ ດັ່ງນີ້:

1. ການຈັດແບ່ງຕາມຂະແໜງການ: ການສຶກສາ, ສາທາລະນະສຸກ, ເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດ, ສິ່ງແວດລ້ອມ, ການປົກຄອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຫວັດດີການສັງຄົມ ແລະ ຂະແໜງການອື່ນ;

2. ການຈັດແບ່ງຕາມແຜນງານ ແລະ ໂຄງການ ແມ່ນ ແຜນງານ ແລະ ໂຄງການທີ່ໄດ້ຮັບຮອງເອົາໃນແຕ່ລະໄລຍະ ເຊັ່ນ ໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ໂຄງການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ແລະ ອື່ນໆ.

# ໝວດທີ 3
# ການດຸນດ່ຽງງົບປະມານແຫ່ງລັດ

## ມາດຕາ 24 ລະບົບການດຸນດ່ຽງງົບປະມານແຫ່ງລັດ

ລະບົບການດຸນດ່ຽງງົບປະມານແຫ່ງລັດ ມີ ສາມ ກໍລະນີ ດັ່ງນີ້:
1. ງົບປະມານແຫ່ງລັດ ສົມດຸນ;
2. ງົບປະມານແຫ່ງລັດ ເກີນດຸນ;
3. ງົບປະມານແຫ່ງລັດ ຂາດດຸນ.

ການຂາດດຸນງົບປະມານແຫ່ງລັດປະຈຳປີ ຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ຄວາມອາດສາມາດຂອງການເງິນແຫ່ງຊາດ. ລະດັບການຂາດດຸນ ແມ່ນ ລັດຖະບານເປັນຜູ້ຕົກລົງ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງເອົາ. ແຫຼ່ງທຶນ ເພື່ອດຸນດ່ຽງການຂາດດຸນງົບປະມານແຫ່ງລັດ ໄດ້ມາຈາກການກູ້ຢືມເງິນຈາກພາຍໃນ ແລະ ຕ່າງປະເທດ.

ມາດຕາ 25 ການດຸນດ່ຽງງົບປະມານແຫ່ງລັດ

ການດຸນດ່ຽງງົບປະມານແຫ່ງລັດ ແມ່ນ ການເຮັດໃຫ້ງົບປະມານມີຄວາມສົມດຸນລະຫວ່າງ ລາຍຮັບກັບລາຍຈ່າຍ ຊຶ່ງຕ້ອງປະຕິບັດ ດັ່ງນີ້:

1. ໃນກໍລະນີທີ່ງົບປະມານເກີນດຸນ ຕ້ອງໂອນສ່ວນເກີນດຸນເຂົ້າຄັງສະສົມການເງິນແຫ່ງລັດ ຫຼື ເພີ່ມລາຍຈ່າຍເຂົ້າໃນວຽກງານທີ່ຈຳເປັນ;

2. ໃນກໍລະນີທີ່ງົບປະມານຂາດດຸນ ຕ້ອງຊອກຫາແຫຼ່ງເງິນ ເພື່ອດຸນດ່ຽງ ຫຼື ຫຼຸດຜ່ອນລາຍຈ່າຍ.

ມາດຕາ 26 ການເກີນດຸນ, ການຂາດດຸນ ແລະ ແຫຼ່ງເງິນດຸນດ່ຽງງົບປະມານແຫ່ງລັດ

ການເກີນດຸນລາຍຮັບທີ່ສູນກາງ ແລະ ທ້ອງຖິ່ນ ຄຸ້ມຄອງ ແມ່ນ ລັດຖະບານເປັນຜູ້ຕົກລົງ ເພື່ອເພີ່ມໃຫ້ລາຍຈ່າຍໃດໜຶ່ງ ຫຼື ມອບເຂົ້າຄັງສະສົມແຫ່ງລັດ.

ງົບປະມານແຫ່ງລັດ ແມ່ນໃຫ້ຂາດດຸນສະເພາະງົບປະມານສູນກາງ ເພື່ອນຳໃຊ້ສະເພາະເຂົ້າໃນການລົງທຶນເທົ່ານັ້ນ.

ແຫຼ່ງເງິນດຸນດ່ຽງງົບປະມານແຫ່ງລັດ ແມ່ນ ເງິນໄດ້ມາຈາກເງິນກູ້ຢືມ ພາຍໃນ ແລະ ຕ່າງປະເທດ:

1. ເງິນກູ້ຢືມພາຍໃນ ໄດ້ມາຈາກການລະດົມທຶນພາຍໃນ ດ້ວຍຮູບການຂາຍພັນທະບັດ, ຮຸ້ນກູ້ ແລະ ອື່ນໆ;

2. ເງິນກູ້ຢືມຕ່າງປະເທດ ໄດ້ມາຈາກຮູບການກູ້ຢືມຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮູບການອື່ນ.

## ພາກທີ III
## ຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ
### ໝວດທີ 1
### ຄວາມຮັບຜິດຊອບຂອງບັນດາອົງການທີ່ມີການພົວພັນກັບງົບປະມານແຫ່ງລັດ

ມາດຕາ 27 (ປັບປຸງ) ຄວາມຮັບຜິດຊອບຂອງສະພາແຫ່ງຊາດ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ສະພາແຫ່ງຊາດ ມີ ຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ພິຈາລະນາຮັບຮອງເອົາ ນະໂຍບາຍການເງິນ, ເງິນຕາ, ແຜນຍຸດທະສາດການເງິນ, ແຜນງົບປະມານແຫ່ງລັດໄລຍະກາງ ແລະ ປະຈຳປີ, ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ, ກຳນົດໝາຍຈັດສັນງົບປະມານ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2. ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ແລະ ຫ້າປີ, ແຜນການລົງທຶນຂອງລັດປະຈຳປີ ແລະ ຫ້າປີ, ໂຄງການລົງທຶນປະເພດ I ແລະ ໂຄງການລົງທຶນຂອງລັດລະດັບຊາດ, ຮັບຮອງເອົາການດັດແກ້ໂຄງການລົງທຶນຂອງລັດປະຈຳປີ;

3. ພິຈາລະນາ, ຮັບຮອງເອົາ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ;

4. ພິຈາລະນາ, ຮັບຮອງເອົາການກຳນົດ, ການປ່ຽນແປງ, ການຍົກເວັ້ນ, ການຍົກເລີກ, ການລົບລ້າງອັດຕາພາສີ ແລະ ສ່ວຍສາອາກອນ.

## ມາດຕາ 28 (ໃໝ່) ຄວາມຮັບຜິດຊອບຂອງສະພາປະຊາຊົນຂັ້ນແຂວງ

ໃນວຽກງານງົບປະມານແຫ່ງລັດ ສະພາປະຊາຊົນຂັ້ນແຂວງ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ ແລະ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນດັ່ງກ່າວ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

2. ພິຈາລະນາ, ຮັບຮອງເອົາ ແຜນການຈັດເກັບລາຍຮັບ, ລາຍຈ່າຍ ປະຈໍາປີ ຂອງທ້ອງຖິ່ນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

3. ພິຈາລະນາ, ຮັບຮອງເອົາ ແຜນການຈັດສັນງົບປະມານແຫ່ງລັດປະຈໍາປີ, ເງິນແຮໃຫ້ເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

4. ພິຈາລະນາ, ຮັບຮອງເອົາ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານຂອງທ້ອງຖິ່ນ;

5. ພິຈາລະນາ, ຮັບຮອງເອົາ ແຜນການກໍ່ສ້າງພື້ນຖານໂຄງລ່າງປະຈໍາປີ ຂອງທ້ອງຖິ່ນ ແລະ ໂຄງການລົງທຶນຂອງລັດປະເພດ V ທີ່ທ້ອງຖິ່ນຮັບຜິດຊອບ;

6. ຊຸກຍູ້ການຕິດຕາມກວດກາສະພາບການຈັດຕັ້ງປະຕິບັດງົບປະມານຂອງບັນດາຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງ.

## ມາດຕາ 29 (ປັບປຸງ) ຄວາມຮັບຜິດຊອບຂອງລັດຖະບານ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ລັດຖະບານ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບນະໂຍບາຍການເງິນ, ເງິນຕາ, ແຜນຍຸດທະສາດການເງິນ, ແຜນງົບປະມານແຫ່ງລັດໄລຍະກາງ ແລະ ປະຈໍາປີ, ການດັດແກ້ແຜນງົບປະມານແຫ່ງລັດປະຈໍາປີ, ກໍານົດໝາຍຈັດສັນງົບປະມານ, ອັດຕາສ່ວນການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;

2. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມປະຈໍາປີ ແລະ ຫ້າປີ, ແຜນການລົງທຶນຂອງລັດປະຈໍາປີ ແລະ ຫ້າປີ, ໂຄງການລົງທຶນຂອງລັດປະເພດ I ແລະ ໂຄງການລົງທຶນຂອງລັດລະດັບຊາດ, ຮັບຮອງເອົາການດັດແກ້ໂຄງການລົງທຶນຂອງລັດປະຈໍາປີ;

3. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈໍາປີ;

4. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດ ກ່ຽວກັບການກໍານົດ, ການປ່ຽນແປງ, ການຍົກເວັ້ນ, ການຍົກເລີກ, ການລົບລ້າງອັດຕາພາສີ ແລະ ສ່ວຍສາອາກອນ;

5. ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປະຈໍາປີ ແລະ ຫ້າປີ ຕໍ່ສະພາແຫ່ງຊາດ;

6. ອອກດໍາລັດກ່ຽວກັບແຜນງົບປະມານແຫ່ງລັດປະຈໍາປີ, ຊີ້ນໍາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ;

7. ຊີ້ນໍາກະຊວງການເງິນ, ບັນດາອົງການຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ປະຕິບັດລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມແຜນງົບປະມານ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ສັ່ງໂຈະລາຍຈ່າຍ ເມື່ອມີການລະເມີດກົດໝາຍກ່ຽວກັບການເງິນ;

8. ຕົກລົງສ້າງຕັ້ງ ຫຼື ຍຸບເລີກຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ;

9. ຕົກລົງມອບສິດໃຫ້ກະຊວງການເງິນ ອອກລະບຽບການ ແລະ ມາດຕະການຄຸ້ມຄອງເກັບລາຍຮັບ, ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 30 (ໃໝ່) ຄວາມຮັບຜິດຊອບຂອງກະຊວງການເງິນ**

ໃນວຽກງານງົບປະມານແຫ່ງລັດ ກະຊວງການເງິນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບບັນດາການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງໃນການສ້າງບັນດາກຳນົດໝາຍການຈັດສັນລາຍຈ່າຍງົບປະມານແຫ່ງລັດ, ການແບ່ງປັນລາຍຮັບ-ລາຍຈ່າຍ, ສ້າງລະບຽບການບັນຊີ ແລະ ສາລະບານງົບປະມານ, ປິດບັນຊີງົບປະມານ ແລະ ການເປີດເຜີຍງົບປະມານແລ້ວນຳສະເໜີລັດຖະບານພິຈາລະນາຕົກລົງ;

2. ສັງລວມແຜນງົບປະມານ, ຄຸ້ມຄອງການຈັດຕັ້ງປະຕິບັດ, ສະເໜີດັດແກ້, ຕີລາຄາສະພາບການຈັດຕັ້ງປະຕິບັດ ແລະ ສ້າງບົດສະຫຼຸບງົບປະມານແຫ່ງລັດປະຈຳປີ;

3. ກູ້ຢືມເງິນ ເພື່ອດຸນດ່ຽງສະພາບຄ່ອງທາງດ້ານງົບປະມານ ພາຍໃນປີງົບປະມານ;

4. ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບ ໃຫ້ໄດ້ຕາມແຜນການ ແລະ ເກີນແຜນການ; ປະຕິບັດລາຍຈ່າຍຕາມແຜນງົບປະມານປະຈຳປີທີ່ລັດຖະບານມອບໃຫ້;

5. ເປັນເຈົ້າການໃນການພົວພັນ, ຮ່ວມມືກັບການຈັດຕັ້ງການເງິນຕ່າງປະເທດ, ອົງການການເງິນສາກົນ, ການຈັດຕັ້ງອື່ນ ທີ່ມີສ່ວນພົວພັນວຽກງານການເງິນ, ສ້າງຮ່າງສັນຍາກູ້ຢືມ, ຊ່ວຍເຫຼືອລ້າກັບຕ່າງປະເທດ ແລະ ບັນດາສະຖາບັນການເງິນສາກົນ ເພື່ອນຳສະເໜີລັດຖະບານພິຈາລະນາ;

6. ຄຸ້ມຄອງເງິນກູ້ຢືມ, ເງິນຊ່ວຍເຫຼືອລ້າ ແລະ ປະຕິບັດການຊຳລະໜີ້ສິນຂອງລັດຖະບານຕາມທີ່ໄດ້ກຳນົດໄວ້ໃນສັນຍາ;

7. ຮັບຜິດຊອບຕໍ່ລັດຖະບານ ໃນການຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃນຂອບເຂດທົ່ວປະເທດ, ກວດກາບັນດາຫົວໜ່ວຍວິສາຫະກິດ, ທຸລະກິດທັງພາກລັດ ແລະ ພາກເອກະຊົນ ຫົວໜ່ວຍງົບປະມານ, ກອງທຶນຂອງລັດ, ອົງການບໍລິຫານວິຊາການແຕ່ລະຂັ້ນ ໃນການປະຕິບັດພັນທະເຂົ້າງົບປະມານ;

8. ຄຸ້ມຄອງຄັງສະສົມແຫ່ງລັດ, ກອງທຶນຂອງລັດ, ຊັບສິນ, ໜີ້ສິນ ແລະ ວັດຖຸມີຄ່າຂອງລັດ;

9. ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ ໃນການກຳນົດເພດານ ແລະ ແຫຼ່ງທຶນ ສຳລັບແຜນການລົງທຶນຂອງລັດ ໄລຍະກາງ ແລະ ປະຈຳປີ ທີ່ນຳໃຊ້ແຫຼ່ງທຶນ ພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ;

10. ປະສານສົມທົບກັບບັນດາຂະແໜງການຂອງສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງຮ່າງແຜນງົບປະມານແຫ່ງລັດປະຈຳປີ, ສະເໜີດັດແກ້ແຜນງົບະມານປະຈຳປີ ເພື່ອສະເໜີລັດຖະບານພິຈາລະນາ;

11. ຊີ້ນຳ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຍຮັບ-ລາຍຈ່າຍ ງົບປະມານ ຕາມຕົວເລກທີ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ ແລະ ຕາມການມອບໝາຍຂອງລັດຖະບານ;

12. ຊີ້ນຳການສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ເພື່ອລາຍງານໃຫ້ອົງການກວດສອບແຫ່ງລັດ ໃຫ້ທັນຕາມກຳນົດເວລາ.

ມາດຕາ 31 (ປັບປຸງ) ຄວາມຮັບຜິດຊອບຂອງກະຊວງແຜນການ ແລະ ການລົງທຶນ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ກະຊວງແຜນການ ແລະ ການລົງທຶນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການສ້າງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມປະຈໍາປີ ແລະ ຫ້າປີ, ແຜນການລົງທຶນແຫ່ງລັດປະຈໍາປີ ແລະ ໂຄງການລົງທຶນຂອງລັດປະເພດ I ແລະ ໂຄງການລົງທຶນຂອງລັດລະດັບຊາດ ເພື່ອນໍາສະເໜີຕໍ່ລັດຖະບານ;

2. ປະສານສົມທົບກັບກະຊວງການເງິນໃນການກໍານົດເພດານ ແລະ ແຫຼ່ງທຶນຂອງແຜນການລົງທຶນຂອງລັດປະຈໍາປີ ແລະ ຫ້າປີ ເປັນລາຍລະອຽດແຕ່ລະຫົວໜ່ວຍ;

3. ເປັນເຈົ້າການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດປະຈໍາປີ ແລະ ແຜນການລົງທຶນຂອງລັດ;

4. ເປັນເຈົ້າການສະຫຼຸບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ທີ່ສະພາແຫ່ງຊາດຮັບຮອງ ໃຫ້ເຫັນຄວາມຄືບໜ້າການຈັດຕັ້ງປະຕິບັດ, ໜີ້ສິນຄ້າງຊໍາລະ, ມູນຄ່າໂຄງການທີ່ຈະສືບຕໍ່ລາຍງານໃຫ້ລັດຖະບານໃນແຕ່ລະໄລຍະ;

5. ເປັນເຈົ້າການ ປະສານສົມທົບກັບຂະແໜງການການເງິນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການຄຸ້ມຄອງນະໂຍບາຍຫຼຸດຜ່ອນພາສີ-ອາກອນ ຕາມກົດໝາຍ.

## ໝວດທີ 2
## ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງກັບງົບປະມານແຫ່ງລັດ

ມາດຕາ 32 ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ທະນາຄານແຫ່ງ ສປປ ລາວ ມີ ຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ບໍລິການບັນຊີເງິນຝາກງົບປະມານແຫ່ງລັດ, ຮັກສາວັດຖຸມີຄ່າທີ່ຂະແໜງການການເງິນຝາກໄວ້;

2. ພິຈາລະນາສະໜອງທຶນກູ້ຢືມໄລຍະສັ້ນໃຫ້ກະຊວງການເງິນ ເມື່ອມີຄວາມຈໍາເປັນ ຕາມການສະເໜີ ຊຶ່ງຕ້ອງໄດ້ທົດແທນຄືນໃນປີງົບປະມານນັ້ນ;

3. ໃຫ້ຄວາມຮ່ວມມືໃນການບໍລິການຮັບ-ຈ່າຍງົບປະມານແຫ່ງລັດ, ເປີດຈົດໝາຍສິນເຊື່ອ ເພື່ອຈັດຊື້ສິນຄ້າ ແລະ ການບໍລິການ ແລະ ດໍາເນີນການຊໍາລະໜີ້ສິນກັບຕ່າງປະເທດ ຕາມການສັ່ງມອບ-ສັ່ງຈ່າຍຂອງກະຊວງການເງິນ;

4. ຂາຍພັນທະບັດຂອງລັດ ຕາມການຕົກລົງຂອງລັດຖະບານ.

ມາດຕາ 33 (ປັບປຸງ) ຄວາມຮັບຜິດຊອບຂອງກະຊວງ ແລະ ການຈັດຕັ້ງອື່ນ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ກະຊວງ ແລະ ການຈັດຕັ້ງອື່ນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນໍາວຽກງານການເງິນຂອງອົງການຕົນ ໃຫ້ປະຕິບັດຕາມກົດໝາຍ ແລະ ວິໄນການເງິນຢ່າງເຂັ້ມງວດໃນການສ້າງແຜນ, ຈັດຕັ້ງປະຕິບັດແຜນ ແລະ ສະຫຼຸບງົບປະມານ, ຮັບປະກັນການເຄື່ອນໄຫວຂອງກິດຈະການໃຫ້ມີປະສິດທິຜົນ, ປະຢັດ, ຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ, ຖືກຕ້ອງຕາມແຜນງົບປະມານທີ່ສະພາແຫ່ງຊາດໄດ້ຮັບຮອງ;

2. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ວິສາຫະກິດຂອງລັດ ແລະ ຫົວໜ່ວຍບໍລິຫານວິຊາການ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ປະຕິບັດພັນທະເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາ ແລະ ການໃຊ້ຈ່າຍໃຫ້ຖືກຕ້ອງຕາມແຜນງົບປະມານ;

3. ຊີ້ນຳ, ຄຸ້ມຄອງ ແລະ ກວດກາການເກັບລາຍຮັບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ໄດ້ຕາມແຜນການ ແລະ ເກີນແຜນການ; ປະຕິບັດລາຍຈ່າຍ ຕາມແຜນງົບປະມານທີ່ລັດຖະບານມອບໃຫ້, ຮັບປະກັນປະສິດທິຜົນ, ການປະຢັດ ແລະ ຖືກຕ້ອງຕາມກົດໝາຍ;

4. ຊີ້ນຳຫົວໜ່ວຍງົບປະມານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຈັດເກັບລາຍຮັບວິຊາການໃຫ້ຖືກຕ້ອງຕາມລະບຽບການ ແລະ ມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ;

5. ປະສານສົມທົບ ກັບກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຄົ້ນຄວ້າສັນຍາກ່ຽວກັບການອະນຸຍາດລົງທຶນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນໃຫ້ລັດໄດ້ຮັບຜົນປະໂຫຍດຢ່າງເໝາະສົມ.

### ມາດຕາ 34 (ປັບປຸງ) ຄວາມຮັບຜິດຊອບຂອງ ແຂວງ, ນະຄອນຫຼວງ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ແຂວງ ແລະ ນະຄອນຫຼວງ ມີ ຄວາມຮັບຜິດຊອບດັ່ງນີ້:

1. ສ້າງ ແລະ ນຳພາຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ ແລະ ຫ້າປີ ຂອງແຂວງ, ນະຄອນຫຼວງ ໃຫ້ສອດຄ່ອງກັບແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສະພາບຈຸດພິເສດ, ທ່າແຮງດ້ານຊັບພະຍາກອນ ແລະ ຄວາມອາດສາມາດບົ່ມຊ້ອນຕົວຈິງຂອງຕົນ;

2. ຊີ້ນຳ ບັນດາພະແນກການ ແລະ ເມືອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ກ່ຽວກັບການສ້າງແຜນ, ຈັດຕັ້ງປະຕິບັດແຜນ ແລະ ສະຫຼຸບແຜນງົບປະມານແຫ່ງລັດປະຈຳປີ ແລະ ຫ້າປີ, ຮັບປະກັນການເຄື່ອນໄຫວຂອງກົງຈັກໃຫ້ມີປະສິດທິຜົນ, ປະຢັດ, ຮັບປະກັນຄວາມສະເໝີພາບບົດບາດຍິງ-ຊາຍ, ຖືກຕ້ອງຕາມແຜນງົບປະມານທີ່ສະພາແຫ່ງຊາດຮັບຮອງ ຕາມກົດໝາຍ ແລະ ລະບຽບການ;

3. ຄຸ້ມຄອງ, ຊີ້ນຳ, ອຳນວຍ, ຄວບຄຸມ ໃຫ້ບັນດາອົງການທີ່ກ່ຽວຂ້ອງ ປະຕິບັດການສ້າງລາຍຮັບຢູ່ແຂວງ, ນະຄອນຫຼວງ ໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ ແລະ ທັນເວລາ;

4. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ແລະ ບັນດາໂຄງການລົງທຶນ ທີ່ສູນກາງຄຸ້ມຄອງ; ເປັນເຈົ້າການໃນການສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນເຂດປົກຄອງຂອງຕົນ;

5. ຊີ້ນຳຂະແໜງການທ້ອງຖິ່ນ ເກັບກຳຖານຂໍ້ມູນລາຍຮັບງົບປະມານ ໃຫ້ຄົບຖ້ວນ ແລະ ຊັດເຈນ ເພື່ອລາຍງານໃຫ້ຂະແໜງລາຍຮັບທີ່ເປັນສາຍຕັ້ງຂອງກະຊວງການເງິນ;

6. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະ ກວດການລາຍຮັບງົບປະມານຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນຫຼັກການລວມສູນທຸກລາຍຮັບງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ເອກະພາບ, ຍຸຕິທຳ, ເປີດເຜີຍ ແລະ ຖືກຕ້ອງຕາມກົດໝາຍ;

7. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະ ກວດການກ່ອນ ແລະ ຫຼັງການປະຕິບັດລາຍຈ່າຍງົບປະມານ ໃຫ້ມີປະສິດທິຜົນ, ປະຢັດ, ຖືກຕ້ອງຕາມແຜນງົບປະມານປະຈຳປີ;

8. ປະສານສົມທົບກັບກະຊວງການເງິນໃນການຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະ ກວດການການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍງົບປະມານຂອງແຂວງ, ນະຄອນຫຼວງ;

9. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ກວດກາ ແລະ ກວດການການປະຕິບັດໜ້າທີ່ຂອງພະນັກງານການເງິນ, ສະເໜີກະຊວງການເງິນ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງພະນັກງານການເງິນຕາມຕຳແໜ່ງງານທີ່ກະຊວງການເງິນຄຸ້ມຄອງ;

10. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດຢູ່ທ້ອງຖິ່ນຂອງຕົນ.

### ມາດຕາ 35 (ໃໝ່) ຄວາມຮັບຜິດຊອບຂອງຂັ້ນເມືອງ

ໃນວຽກງານການເງິນ ແລະ ງົບປະມານແຫ່ງລັດ ຂັ້ນເມືອງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງ ແລະ ນຳພາຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງຂັ້ນເມືອງ ປະຈຳປີ ແລະ ຫ້າປີ ໃຫ້ສອດຄ່ອງກັບແຜນຍຸດທະສາດ ຂອງແຂວງ, ນະຄອນຫຼວງ, ສະພາບຈຸດພິເສດ, ທ່າແຮງດ້ານຊັບພະຍາກອນ ແລະ ຄວາມອາດສາມາດບົ່ມຊ້ອນຕົວຈິງຂອງຂັ້ນເມືອງ;

2. ຊີ້ນຳບັນດາຫ້ອງການຂັ້ນເມືອງ ໃນການສ້າງແຜນ, ຈັດແບ່ງແຜນ, ປະຕິບັດແຜນ ແລະ ສະຫຼຸບແຜນງົບປະມານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ; ອຳນວຍ, ຄວບຄຸມ ໃຫ້ບັນດາອົງການທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບຢູ່ຂັ້ນເມືອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

4. ປະສານສົມທົບກັບພະແນກການເງິນປະຈຳແຂວງ, ນະຄອນຫຼວງ ໃນການຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍງົບປະມານຂອງຂັ້ນເມືອງ;

5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ກວດການການປະຕິບັດໜ້າທີ່ຂອງພະນັກງານການເງິນ; ປະສານສົມທົບກັບ ແຂວງ, ນະຄອນຫຼວງ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງພະນັກງານການເງິນຕາມລະບຽບການ;

6. ຈັດຕັ້ງ, ນຳພາ, ອຳນວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວການປະຕິບັດໜ້າທີ່ຂອງບັນດາພະນັກງານການເງິນປະຈຳແຕ່ລະຫ້ອງການຂັ້ນເມືອງ, ການເຄື່ອນໄຫວປະຕິບັດໜ້າທີ່ຂອງການເງິນຂັ້ນບ້ານ;

7. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ກວດກາການປະຕິບັດໜ້າທີ່ຂອງພະນັກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດປະຈຳຂັ້ນເມືອງຂອງຕົນ.

### ມາດຕາ 36 ຄວາມຮັບຜິດຊອບຂອງຫົວໜ່ວຍງົບປະມານ

ໃນການຄຸ້ມຄອງແຜນງົບປະມານແຫ່ງລັດ ຫົວໜ່ວຍງົບປະມານ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນງົບປະມານ ແລະ ຈັດແບ່ງແຜນລາຍຮັບ-ລາຍຈ່າຍງົບປະມານປະຈຳປີ ພ້ອມທັງມອບຕົວເລກແຜນການດັ່ງກ່າວ ໃຫ້ກົມກອງ ແລະ ຫົວໜ່ວຍງົບປະມານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ ເຜີຍແຜ່ກົດໝາຍ ກ່ຽວກັບການເງິນ-ງົບປະມານ, ແນະນຳການຄຸ້ມຄອງການເງິນ, ການຖືບັນຊີ, ການຈັດກ່າຍ ໃຫ້ຖືກຕ້ອງຕາມລະບຽບການບັນຊີ;

3. ຈັດຕັ້ງປະຕິບັດແຜນງົບປະມານລາຍຮັບ ແລະ ລາຍຈ່າຍທີ່ໄດ້ຮັບມອບໝາຍ, ເກັບລາຍຮັບໃຫ້ຄົບຖ້ວນ, ທັນກຳນົດເວລາ, ໄລ່ລຽງລາຍຈ່າຍໃຫ້ມີປະສິດທິຜົນ, ນຳໃຊ້ໃຫ້ຖືກ, ມັດທະຍັດ ແລະ ຖືກຕ້ອງຕາມກົດໝາຍ;

4. ປະຕິບັດກົດໝາຍ ແລະ ລະບຽບການໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ຕາມແຜນງົບປະມານແຫ່ງລັດປະຈຳປີ ໃນການຈັດຊື້ສິນຄ້າ, ການຈັດຈ້າງ ແລະ ການບໍລິການ ດ້ວຍການນຳໃຊ້ງົບປະມານແຫ່ງລັດ;

5. ຖືບັນຊີ ແລະ ຈົດກ່າຍໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ, ຕາມສາລະບານງົບປະມານ;

6. ປະສານສົມທົບກັບຄັງເງິນແຫ່ງຊາດ ສົມທຽບຕົວເລກການປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານ ແລະ ສະຫຼຸບ ລາຍງານການຈັດຕັ້ງປະຕິບັດງົບປະມານ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນກຳນົດເວລາ.

**ມາດຕາ 37 ຄວາມຮັບຜິດຊອບຂອງຜູ້ປະຕິບັດພັນທະເຂົ້າງົບປະມານ**

ໃນການຈັດຕັ້ງປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຕ້ອງມອບພັນທະ ພາສີ, ສ່ວຍສາອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ເຂົ້າງົບປະມານໃຫ້ຄົບຖ້ວນ, ທັນເວລາ ແລະ ຖືກຕ້ອງຕາມກົດໝາຍ;

2. ຖືບັນຊີຕາມລະບຽບ ແລະ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ, ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ຢູ່ພາຍໃຕ້ການກວດກາຂອງຂະແໜງການການເງິນ ແລະ ອົງການກວດສອບພາຍນອກ ຕາມລະບຽບການ;

3. ສະເໜີ, ຮ້ອງຟ້ອງ ແລະ ຮ້ອງຂໍຄວາມເປັນທຳ ໃນກໍລະນີທີ່ເຫັນວ່າບໍ່ໄດ້ຮັບຄວາມຍຸຕິທຳຈາກການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ຂະແໜງການການເງິນ, ເຈົ້າໜ້າທີ່ ພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ.

ການບໍ່ປະຕິບັດພັນທະຂອງຕົນຕໍ່ງົບປະມານ ເຊັ່ນ ການເຊື່ອງອຳ, ການປົກປິດລາຍຮັບ, ການລັກລອບໜີພາສີ, ການຄ້າຂາຍເຖື່ອນ, ການສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ຂອງລັດ ກ່ຽວກັບການມອບພັນທະເຂົ້າງົບປະມານ ຖືວ່າເປັນຄວາມຜິດ ແລະ ຈະຖືກດຳເນີນຄະດີຕາມກົດໝາຍ.

# ພາກທີ IV
# ການແບ່ງຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ
## ໝວດທີ 1
## ການແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ

**ມາດຕາ 38 (ປັບປຸງ) ລະບົບງົບປະມານແຫ່ງລັດ**

ລະບົບງົບປະມານແຫ່ງລັດ ປະກອບດ້ວຍ ງົບປະມານສູນກາງ ແລະ ງົບປະມານທ້ອງຖິ່ນ ຊຶ່ງແມ່ນລະບົບງົບປະມານລວມສູນອັນດຽວ ໃນຂອບເຂດທົ່ວປະເທດ ແລະ ແບ່ງຄວາມຮັບຜິດຊອບໃນການຄຸ້ມຄອງ.

1. ງົບປະມານສູນກາງ ແມ່ນ ງົບປະມານຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;

2. ງົບປະມານທ້ອງຖິ່ນ ແມ່ນ ງົບປະມານຂອງອົງການປົກຄອງທ້ອງຖິ່ນ, ຂະແໜງການຕ່າງໆ ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.

**ມາດຕາ 39 (ປັບປຸງ) ການແບ່ງຄວາມຮັບຜິດຊອບກ່ຽວກັບງົບປະມານແຫ່ງລັດ**

ການແບ່ງຄວາມຮັບຜິດຊອບ ກ່ຽວກັບງົບປະມານແຫ່ງລັດ ແມ່ນ ການແບ່ງສິດໃນການຊີ້ນຳ, ການຄຸ້ມຄອງ ແລະ ຕົກລົງ ໃນການສ້າງແຜນ, ຈັດຕັ້ງປະຕິບັດແຜນ, ສະຫຼຸບ, ກວດກາ ແລະ ປະເມີນຜົນ

ງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຊັດເຈນ ໂດຍສະເພາະຄວາມຮັບຜິດຊອບໃນການຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ.

ໃນການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນນັ້ນ ຕ້ອງຮັບປະກັນຫຼັກການຂະແໜງການສູນກາງຄຸ້ມຄອງມະຫາພາກ, ອອກນິຕິກຳ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ແລະ ຍົກສູງຄວາມຮັບຜິດຊອບ ຂອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດງົບປະມານ ບົນພື້ນຖານຫຼັກການລວມສູນງົບປະມານແຫ່ງລັດ.

ການແບ່ງຄວາມຮັບຜິດຊອບກ່ຽວກັບລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຕ້ອງຮັບປະກັນຫຼັກການຄຸ້ມຄອງເປັນເອກະພາບ ໂດຍຂັ້ນສູນກາງ ມີບົດບາດເປັນຜູ້ຄຸ້ມຄອງ ແລະ ດັດສົມລາຍຮັບ-ລາຍຈ່າຍໃນຂອບເຂດທົ່ວປະເທດ, ຊ່ວຍໜູນບັນດາແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ທີ່ຍັງຂາດດຸນ ເພື່ອກ້າວຂຶ້ນເປັນເຈົ້າຕົນເອງເທື່ອລະກ້າວ; ຂັ້ນທ້ອງຖິ່ນ ຕ້ອງເສີມຂະຫຍາຍທ່າແຮງ ແລະ ຄວາມສາມາດບົ່ມຊ້ອນ ເພື່ອຍົກສູງຄວາມສາມາດຂຸດຄົ້ນເກັບລາຍຮັບເພີ່ມຂຶ້ນ, ຄຸ້ມຄອງລາຍຈ່າຍຢ່າງຮັດກຸມ, ສາມາດຕອບສະໜອງຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ.

## ໝວດທີ 2
## ການແບ່ງຂັ້ນຄຸ້ມຄອງການເກັບລາຍຮັບງົບປະມານແຫ່ງລັດ

### ມາດຕາ 40 (ປັບປຸງ) ການແບ່ງຂັ້ນຄຸ້ມຄອງການເກັບລາຍຮັບງົບປະມານແຫ່ງລັດ

ການແບ່ງຂັ້ນຄຸ້ມຄອງການເກັບລາຍຮັບງົບປະມານແຫ່ງລັດ ມີ ດັ່ງນີ້:

1. ລາຍຮັບງົບປະມານແຫ່ງລັດທີ່ສູນກາງ ຄຸ້ມຄອງການເກັບ;
2. ລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນ ຄຸ້ມຄອງການເກັບ.

### ມາດຕາ 41 (ປັບປຸງ) ລາຍຮັບງົບປະມານແຫ່ງລັດທີ່ສູນກາງຄຸ້ມຄອງການເກັບ

ລາຍຮັບງົບປະມານແຫ່ງລັດທີ່ສູນກາງຄຸ້ມຄອງການເກັບ ມີ ດັ່ງນີ້:

1. ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນກຳໄລ ແລະ ລາຍຮັບເງິນປັນຜົນກຳໄລສຸດທິຈາກຫົວໜ່ວຍທຸລະກິດ ທີ່ສູນກາງຄຸ້ມຄອງ;
2. ພາສີຂາເຂົ້າ-ຂາອອກ;
3. ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນກຳໄລຈາກສິນຄ້ານຳເຂົ້າ;
4. ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆໃນຂອດຂາອອກ-ຂາເຂົ້າ ເຊັ່ນ ຄ່າຜ່ານດ່ານ, ຄ່າອອກໜັງສື ແລະ ບັດຜ່ານແດນ;
5. ລາຍຮັບຈາກຊັບພະຍາກອນທຳມະຊາດ ເຊັ່ນ ການຂາຍໄມ້ ແລະ ແຮ່ທາດ;
6. ລາຍຮັບຈາກການບິນຜ່ານນ່ານຟ້າ, ຄ່າພາກຫຼວງ;
7. ລາຍຮັບຈາກດອກເບ້ຍເງິນກູ້ຢືມ;
8. ລາຍຮັບຈາກການເຊົ່າເຮືອນ ແລະ ຊັບສິນອື່ນຂອງລັດ ທີ່ສູນກາງຄຸ້ມຄອງ;
9. ລາຍຮັບຈາກບັນດາກອງທຶນຂອງລັດທີ່ສູນກາງຄຸ້ມຄອງ;
10. ລາຍຮັບຈາກບັນດາອົງການບໍລິຫານວິຊາການທີ່ສູນກາງຄຸ້ມຄອງ;
11. ລາຍຮັບຈາກການປັບໃໝ ແລະ ການຂາຍເຄື່ອງທີ່ຖືກຮິບທີ່ສູນກາງຄຸ້ມຄອງ;
12. ລາຍຮັບຈາກການຊ່ວຍເຫຼືອຂອງຕ່າງປະເທດ ທີ່ສູນກາງຄຸ້ມຄອງ;

13.ລາຍຮັບຈາກການລະດົມທຶນ ແລະ ການປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງທີ່ຂຶ້ນກັບສູນກາງຄຸ້ມຄອງ;

14.ລາຍຮັບອື່ນຕາມກົດໝາຍ.

ຫົວໜ່ວຍທຸລະກິດ ທີ່ສູນກາງຄຸ້ມຄອງ ແມ່ນ ຫົວໜ່ວຍທຸລະກິດ ຂະໜາດໃຫຍ່, ບໍລິສັດຂ້າມຊາດ, ບໍລິສັດທີ່ນຳໃຊ້ເຕັກໂນໂລຊີລະດັບສູງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 42 (ປັບປຸງ) ລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນ ຄຸ້ມຄອງການເກັບ**

ກ. ລາຍຮັບງົບປະມານແຫ່ງລັດທີ່ຂັ້ນແຂວງ ຄຸ້ມຄອງການເກັບ ມີ ດັ່ງນີ້:

1. ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນກຳໄລ ແລະ ລາຍຮັບເງິນປັນຜົນກຳໄລສຸດທິ ຈາກຫົວໜ່ວຍທຸລະກິດ ທີ່ຂັ້ນແຂວງ ຄຸ້ມຄອງ;
2. ຄ່າທຳນຽມນຳໃຊ້ທີ່ດິນ(ພາສີທີ່ດິນ), ຄ່າເຊົ່າທີ່ດິນ; ຄ່າມອບສິດນຳໃຊ້ ແລະ ໂອນສິດນຳໃຊ້ທີ່ດິນ, ຄ່າທຳນຽມອອກທະບຽນອາກອນ, ອາກອນລາຍໄດ້ບຸກຄົນ;
3. ລາຍຮັບຈາກການສຳປະທານຂຸດຄົ້ນຫີນແຮ່, ຊາຍ, ດິນດຳ ແລະ ດິນແດງ;
4. ຄ່າເຊົ່າເຮືອນ, ທີ່ດິນ ແລະ ຊັບສິນອື່ນຂອງລັດ ທີ່ຂັ້ນແຂວງຄຸ້ມຄອງ;
5. ລາຍຮັບຈາກບັນດາກອງທຶນຂອງລັດທີ່ຂັ້ນແຂວງຄຸ້ມຄອງ;
6. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການວິຊາການທີ່ຂັ້ນແຂວງຄຸ້ມຄອງ;
7. ລາຍຮັບຈາກການປັບໃໝ ແລະ ການຂາຍເຄື່ອງຖືກຮິບ ທີ່ຂັ້ນແຂວງຄຸ້ມຄອງ;
8. ລາຍຮັບຈາກການລະດົມທຶນ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂັ້ນແຂວງຄຸ້ມຄອງ;
9. ລາຍຮັບຈາກການຊ່ວຍເຫຼືອລ້າຈາກຕ່າງປະເທດ ທີ່ຂັ້ນແຂວງຄຸ້ມຄອງ;
10. ລາຍຮັບອື່ນຕາມກົດໝາຍ.

ຂ. ລາຍຮັບງົບປະມານແຫ່ງລັດຂັ້ນເມືອງ ຄຸ້ມຄອງການເກັບ ມີ ດັ່ງນີ້:

1. ອາກອນມູນຄ່າເພີ່ມ, ອາກອນຊົມໃຊ້, ອາກອນກຳໄລ ແລະ ລາຍຮັບເງິນປັນຜົນກຳໄລສຸດທິ ຈາກຫົວໜ່ວຍທຸລະກິດ ທີ່ຂັ້ນເມືອງຄຸ້ມຄອງ;
2. ອາກອນລາຍໄດ້, ອາກອນມອບເໝົາ, ອາກອນສະແຕມ ທີ່ຂັ້ນເມືອງຄຸ້ມຄອງ;
3. ຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ), ຄ່າເຊົ່າທີ່ດິນ, ຄ່າມອບສິດນຳໃຊ້ ແລະ ໂອນສິດນຳໃຊ້ທີ່ດິນ ທີ່ຂັ້ນເມືອງຄຸ້ມຄອງ;
4. ລາຍຮັບຈາກການສຳປະທານຂຸດຄົ້ນ ຫີນແຮ່, ຊາຍ, ດິນດຳ ແລະ ດິນແດງທີ່ຂັ້ນເມືອງຄຸ້ມຄອງ;
5. ຄ່າເຊົ່າເຮືອນ, ທີ່ດິນ ແລະ ຊັບສິນອື່ນຂອງລັດ ທີ່ຂັ້ນເມືອງຄຸ້ມຄອງ;
6. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການວິຊາການທີ່ຂັ້ນເມືອງຄຸ້ມຄອງ;
7. ລາຍຮັບຈາກການປັບໃໝ ແລະ ການຂາຍເຄື່ອງຖືກຮິບທີ່ຂັ້ນເມືອງຄຸ້ມຄອງ;
8. ລາຍຮັບຈາກການລະດົມທຶນ ແລະ ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຂັ້ນເມືອງຄຸ້ມຄອງ;
9. ລາຍຮັບອື່ນ ຕາມການມອບໝາຍຂອງແຂວງ, ນະຄອນຫຼວງ.

## ໝວດທີ 3
## ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ

**ມາດຕາ 43 (ປັບປຸງ) ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ**

ການແບ່ງຂັ້ນຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ ມີ ດັ່ງນີ້:

1. ລາຍຈ່າຍງົບປະມານແຫ່ງລັດຂັ້ນສູນກາງ;
2. ລາຍຈ່າຍງົບປະມານແຫ່ງລັດຂັ້ນທ້ອງຖິ່ນ.

**ມາດຕາ 44 (ປັບປຸງ) ລາຍຈ່າຍງົບປະມານແຫ່ງລັດຂັ້ນສູນກາງ**

ລາຍຈ່າຍງົບປະມານແຫ່ງລັດຂັ້ນສູນກາງ ມີ ດັ່ງນີ້:

1. ວຽກງານບໍລິຫານກິງຈັກຂອງການຈັດຕັ້ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
2. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ;
3. ການສຶກສາວິຊາຊີບ ແລະ ຂັ້ນວິທະຍາໄລ ຂຶ້ນໄປ, ການບໍລິຫານການສຶກສາ, ການຄຸ້ມຄອງຫຼັກສູດການຮຽນ-ການສອນ;
4. ການຊໍາລະດອກເບ້ຍເງິນກູ້ຢືມພາຍໃນປະເທດ ແລະ ຕ່າງປະເທດຂອງລັດຖະບານ, ເງິນປະກອບພັນທະໃຫ້ອົງການຈັດຕັ້ງສາກົນ;
5. ກອງທຶນຂອງລັດ;
6. ເງິນແຮລັດຖະບານ;
7. ຄັງສະສົມແຫ່ງລັດ;
8. ການລົງທຶນຂອງລັດ ທີ່ສູນກາງຄຸ້ມຄອງ;
9. ການໃຫ້ກູ້ຢືມຕໍ່ຂອງລັດຖະບານ;
10. ການຊ່ວຍເຫຼືອລ້າ;
11. ລາຍຈ່າຍອື່ນຕາມກົດໝາຍ.

**ມາດຕາ 45 (ປັບປຸງ) ລາຍຈ່າຍງົບປະມານແຫ່ງລັດທີ່ທ້ອງຖິ່ນ ຄຸ້ມຄອງ**

ກ. ລາຍຈ່າຍງົບປະມານແຫ່ງລັດທີ່ຂັ້ນແຂວງ ຄຸ້ມຄອງ ມີ ດັ່ງນີ້:

1. ວຽກງານບໍລິຫານຂອງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ;
2. ການສຶກສາຂັ້ນລຸ່ມວິທະຍາໄລລົງມາ;
3. ເງິນແຮທ້ອງຖິ່ນ;
4. ການລົງທຶນຂອງລັດ ທີ່ຂັ້ນແຂວງຄຸ້ມຄອງ;
5. ການຊ່ວຍເຫຼືອລ້າ;
6. ລາຍຈ່າຍອື່ນຕາມກົດໝາຍ.

ຂ. ລາຍຈ່າຍງົບປະມານແຫ່ງລັດຂັ້ນເມືອງ ຄຸ້ມຄອງ ມີ ດັ່ງນີ້:

1. ວຽກງານບໍລິຫານຂອງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນເມືອງ;
2. ເງິນແຮທ້ອງຖິ່ນ ທີ່ຂັ້ນແຂວງມອບໃຫ້ຄຸ້ມຄອງ;

3. ການລົງທຶນຂອງລັດທີ່ຂັ້ນເມືອງຄຸ້ມຄອງ;

4. ລາຍຈ່າຍອື່ນຕາມກົດໝາຍ.

## ໝວດທີ 4
## ການຊ່ວຍໜູນງົບປະມານແຫ່ງລັດ

**ມາດຕາ 46 (ປັບປຸງ) ການຊ່ວຍໜູນເພື່ອການດຸນດ່ຽງງົບປະມານແຫ່ງລັດລະຫວ່າງສູນກາງ ແລະ ທ້ອງຖິ່ນ**

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນຄຸ້ມຄອງ ຫາກບໍ່ພຽງພໍກັບລາຍຈ່າຍທີ່ສະພາແຫ່ງຊາດຮັບຮອງນັ້ນ ງົບປະມານສູນກາງ ຕ້ອງຊ່ວຍໜູນໃຫ້ງົບປະມານທ້ອງຖິ່ນ ເພື່ອຮັບປະກັນລາຍຈ່າຍປະຈຳປີ.

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ທ້ອງຖິ່ນຄຸ້ມຄອງ ຫາກເກີນດຸນງົບປະມານ ທີ່ສະພາແຫ່ງຊາດ ຮັບຮອງນັ້ນ ງົບປະມານທ້ອງຖິ່ນ ຕ້ອງໂອນສ່ວນທີ່ເກີນນັ້ນ ໃຫ້ງົບປະມານແຫ່ງລັດຂັ້ນສູນກາງ.

**ມາດຕາ 47 (ໃໝ່) ການຊ່ວຍໜູນເພື່ອດຸນດ່ຽງງົບປະມານແຫ່ງລັດລະຫວ່າງຂັ້ນແຂວງ ແລະ ຂັ້ນເມືອງ**

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ຂັ້ນເມືອງຄຸ້ມຄອງ ຫາກບໍ່ພຽງພໍກັບລາຍຈ່າຍທີ່ສະພາປະຊາຊົນຂັ້ນແຂວງຮັບຮອງນັ້ນ ງົບປະມານແຫ່ງລັດຂັ້ນແຂວງ ຕ້ອງຊ່ວຍໜູນງົບປະມານແຫ່ງລັດຂັ້ນເມືອງ ເພື່ອຮັບປະກັນລາຍຈ່າຍປະຈຳປີ.

ໃນກໍລະນີລາຍຮັບງົບປະມານແຫ່ງລັດທີ່ຂັ້ນເມືອງຄຸ້ມຄອງ ຫາກເກີນດຸນງົບປະມານທີ່ສະພາປະຊາຊົນຂັ້ນແຂວງຮັບຮອງນັ້ນ ງົບປະມານແຫ່ງລັດຂັ້ນເມືອງຕ້ອງໂອນສ່ວນທີ່ເກີນນັ້ນ ໃຫ້ງົບປະມານແຫ່ງລັດຂັ້ນແຂວງ.

**ມາດຕາ 48 (ປັບປຸງ) ການຊ່ວຍໜູນງົບປະມານແຫ່ງລັດທີ່ມີເປົ້າໝາຍສະເພາະ**

ນອກຈາກການຊ່ວຍໜູນ ລະຫວ່າງງົບປະມານແຫ່ງລັດຂັ້ນສູນກາງ ແລະ ຂັ້ນແຂວງ ທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້, ງົບປະມານແຫ່ງລັດຂັ້ນສູນກາງ ຈະຊ່ວຍໜູນໃຫ້ງົບປະມານແຫ່ງລັດຂັ້ນແຂວງ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍສະເພາະໃນການປະຕິບັດແຜນງານ, ໂຄງການລົງທຶນຂອງລັດລະດັບຊາດຕາມທີ່ໄດ້ກຳນົດໄວ້ໃນແຜນງົບປະມານປະຈຳປີທີ່ຖືກຮັບຮອງຈາກສະພາແຫ່ງຊາດ.

ການຊ່ວຍໜູນງົບປະມານແຫ່ງລັດທີ່ມີເປົ້າໝາຍສະເພາະ ແມ່ນລັດຖະບານເປັນຜູ້ຄົ້ນຄວ້າ ແລະ ສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 49 (ປັບປຸງ) ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານແຫ່ງລັດ**

ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານແຫ່ງລັດ ມີ ດັ່ງນີ້:

1. ໃນກໍລະນີແຂວງ, ນະຄອນຫຼວງ ປະຕິບັດລາຍຮັບລວມທີ່ຂັ້ນຂອງຕົນຄຸ້ມຄອງໄດ້ເກີນແຜນການ, ສ່ວນທີ່ເກີນນັ້ນ ມອບໃຫ້ນຳໃຊ້ ເພື່ອພັດທະນາທ້ອງຖິ່ນຂອງຕົນ ໂດຍເອົາເຂົ້າໃນແຜນງົບປະມານແຫ່ງລັດໃນປີຖັດໄປ;

2. ໃນກໍລະນີຂັ້ນເມືອງ ປະຕິບັດລາຍຮັບທີ່ຕົນຄຸ້ມຄອງ ໄດ້ເກີນແຜນການ ແລະ ລາຍຮັບລວມທົ່ວແຂວງ, ນະຄອນຫຼວງ ກໍເກີນແຜນການ, ສ່ວນທີ່ເກີນນັ້ນ ມອບສິດໃຫ້ແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາ ໃຫ້ຂັ້ນເມືອງນຳໃຊ້ ເພື່ອພັດທະນາທ້ອງຖິ່ນຂອງຕົນໂດຍເອົາເຂົ້າໃນແຜນງົບປະມານແຫ່ງລັດໃນປີຖັດໄປ;

3. ການນຳໃຊ້ເງິນລາຍຮັບສ່ວນທີ່ເກີນແຜນ ຕ້ອງໄລ່ລຽງໃຫ້ຖືກຕ້ອງຕາມລະບຽບການ ໂດຍໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ ແລະ ສັງລວມແຜນລາຍຈ່າຍທີ່ນຳໃຊ້ເງິນເກີນແຜນດັ່ງກ່າວ ເຂົ້າໃນແຜນງົບປະມານແຫ່ງລັດໃນປີຖັດໄປ;

4. ການນຳໃຊ້ເງິນລາຍຮັບສ່ວນທີ່ເກີນແຜນ ແມ່ນເພື່ອເປົ້າໝາຍພັດທະນາທ້ອງຖິ່ນ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ.

ລັດຖະບານ ເປັນຜູ້ຄົ້ນຄວ້າຕົກລົງອັດຕາສ່ວນການນຳໃຊ້ເງິນເກີນແຜນຂອງທ້ອງຖິ່ນ ຊຶ່ງລາຍລະອຽດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 (ໃໝ່) ນະໂຍບາຍສົ່ງເສີມການປະຕິບັດລາຍຈ່າຍໃຫ້ມີປະສິດທິຜົນ**

ການປະຕິບັດລາຍຈ່າຍງົບປະມານແຫ່ງລັດປະຈຳປີ ຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນທີ່ຜ່ານການປະເມີນແລ້ວ ຫາກເຫັນວ່າ ໄດ້ປະຕິບັດຖືກຕ້ອງຕາມແຜນທີ່ສະພາແຫ່ງຊາດຮັບຮອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ນຳໃຊ້ງົບປະມານຂອງຕົນຖືກຕ້ອງຕາມເປົ້າໝາຍ, ໂປ່ງໃສ ແລະ ມີປະສິດທິຜົນສູງ ຈະໄດ້ຮັບນະໂຍບາຍເພີ່ມແຜນງົບປະມານລາຍຈ່າຍໃຫ້ໃນປີຕໍ່ໄປ ຕາມການຕົກລົງຂອງລັດຖະບານໃນແຕ່ລະໄລຍະ.

**ມາດຕາ 51 (ປັບປຸງ) ວິທີການແກ້ໄຂການເກັບລາຍຮັບ ທີ່ບໍ່ໄດ້ຕາມແຜນການ**

ພາຍຫຼັງທີ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ເກີນຫົກເດືອນ ແລະ ຄາດຄະເນການເກັບລາຍຮັບບໍ່ໄດ້ຕາມແຜນການປີຕໍ່າກວ່າຫ້າສ່ວນຮ້ອຍແລ້ວ ກະຊວງການເງິນເປັນເຈົ້າການຄົ້ນຄວ້າແຫຼ່ງທຶນ ຫຼື ຫຼຸດລາຍຈ່າຍຕາມຈຳນວນເງິນທີ່ຄາດຄະເນເກັບບໍ່ໄດ້ ເພື່ອສະເໜີລັດຖະບານຕົກລົງ ແລ້ວລາຍງານໃຫ້ສະພາແຫ່ງຊາດຊາບ.

ໃນກໍລະນີທີ່ການເກັບລາຍຮັບ ຫາກບໍ່ໄດ້ຕາມແຜນການປະຈຳປີ ແຕ່ຫ້າສ່ວນຮ້ອຍຂຶ້ນໄປນັ້ນ ກະຊວງການເງິນ ຕ້ອງສະເໜີລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາດັດແກ້ແຜນງົບປະມານແຫ່ງລັດ.

## ພາກທີ V
## ການສ້າງ ແລະ ການຮັບຮອງແຜນງົບປະມານແຫ່ງລັດ
### ໝວດທີ 1
### ການສ້າງແຜນງົບປະມານແຫ່ງລັດ

**ມາດຕາ 52 (ປັບປຸງ) ການສ້າງແຜນງົບປະມານແຫ່ງລັດ**

ການສ້າງແຜນງົບປະມານແຫ່ງລັດປະຈຳປີ ໃຫ້ປະຕິບັດ ດັ່ງນີ້:

1. ສ້າງບົນພື້ນຖານແຜນການເງິນໄລຍະກາງ, ໄລຍະຍາວ;

2. ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ;

3. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ດ້ວຍການເຂົ້າຮ່ວມ ຂອງຂະແໜງການທີ່ກ່ຽວຂ້ອງ;

4. ເລີ່ມຈາກຫົວໜ່ວຍງົບປະມານແຕ່ລະຂັ້ນຂຶ້ນມາຕາມຄຳສັ່ງ, ທິດເລກຊີ້ນຳຂອງລັດຖະບານ ແລະ ຄຳແນະນຳຂອງກະຊວງການເງິນ.

ຂະແໜງການທີ່ຄຸ້ມຄອງຕາມສາຍຕັ້ງ ຕ້ອງໄດ້ສັງລວມແຜນງົບປະມານ ຕາມຂະແໜງການຂອງຕົນແຕ່ສູນກາງ ຮອດ ທ້ອງຖິ່ນ.

**ມາດຕາ 53 (ໃໝ່) ການຈັດສັນງົບປະມານແຫ່ງລັດ**

ລັດຖະບານ ສ້າງກຳນົດໝາຍການຈັດສັນງົບປະມານແຫ່ງລັດ ໂດຍອີງໃສ່ ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ, ຈຳນວນປະຊາກອນ, ຈຳນວນລັດຖະກອນ, ລະດັບຄວາມທຸກຍາກ, ເງື່ອນໄຂທີ່ຕັ້ງທາງດ້ານພູມສາດ, ເຂດຫ່າງໄກສອກຫຼີກ ແລະ ຈຸດພິເສດທ່າແຮງທາງດ້ານເສດຖະກິດ-ສັງຄົມ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ.

ໂດຍອີງໃສ່ກຳນົດໝາຍການຈັດສັນງົບປະມານແຫ່ງລັດ ລັດຖະບານ ກຳນົດເພດານລາຍຈ່າຍໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອເປັນບ່ອນອີງໃນການສ້າງແຜນງົບປະມານແຫ່ງລັດໃນແຕ່ລະປີ.

**ມາດຕາ 54 ການສັງລວມແຜນງົບປະມານແຫ່ງລັດ**

ກະຊວງການເງິນ ເປັນຜູ້ສັງລວມແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຂອງບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ລວມທັງແຜນດຸນດ່ຽງງົບປະມານແຫ່ງລັດ ແລ້ວລາຍງານລັດຖະບານ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

**ມາດຕາ 55 (ປັບປຸງ) ບັນດາເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ**

ບັນດາເອກະສານທີ່ລັດຖະບານ ຕ້ອງນຳສະເໜີຕໍ່ສະພາແຫ່ງຊາດ ມີ ດັ່ງນີ້:

1. ບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດຂາດຕົວງົບປະມານແຫ່ງລັດປະຈຳປີຜ່ານມາ;
2. ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ;
3. ບົດສະເໜີນະໂຍບາຍການເງິນ, ນະໂຍບາຍງົບປະມານ ແລະ ແຜນງົບປະມານແຫ່ງລັດໄລຍະກາງ ແລະ ປີຖັດໄປ;
4. ຕາຕະລາງຮ່າງແຜນງົບປະມານແຫ່ງລັດ ຂອງບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;
5. ບົດລາຍງານສະພາບໜີ້ສິນຂອງລັດ, ຍອດໜີ້ສິນທີ່ຮອດກຳນົດ, ກາຍກຳນົດ, ຕົ້ນທຶນ ແລະ ດອກເບ້ຍ ທີ່ຕ້ອງຊຳລະ ແລະ ຄາດຄະເນສະພາບໜີ້ສິນຂອງລັດໄລຍະກາງ;
6. ບັນຊີແຜນງານ ແລະ ໂຄງການລົງທຶນປົກກະຕິຂອງລັດ; ໂຄງການລົງທຶນຂອງລັດປະເພດ I, ໂຄງການລົງທຶນຂອງລັດລະດັບຊາດ;
7. ແຜນງານ ແລະ ໂຄງການ ທີ່ມີການຊ່ວຍໜູນງົບປະມານແຫ່ງລັດທີ່ມີເປົ້າໝາຍສະເພາະຂອງສູນກາງ ໃຫ້ທ້ອງຖິ່ນ.

**ມາດຕາ 56 (ປັບປຸງ) ຂັ້ນຕອນ ແລະ ກຳນົດເວລາ ການສ້າງແຜນງົບປະມານແຫ່ງລັດ**

ການສ້າງແຜນງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ກຳນົດເວລາ ດັ່ງນີ້:

1. ນາຍົກລັດຖະມົນຕີ ອອກຄຳສັ່ງກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳກ່ຽວກັບການສ້າງແຜນງົບປະມານແຫ່ງລັດປະຈຳປີ ແລະ ແຈ້ງການຄາດຄະເນເພດານງົບປະມານ ຕາມຂອບງົບປະມານໄລຍະກາງ ໃຫ້ຂະແໜງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃນເດືອນມີນາ;

2. ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ປະສານສົມທົບກັບກຳມາທິການສະພາແຫ່ງຊາດ ແລະ ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແຜນງົບປະມານແຫ່ງລັດແຕ່ຫົວທີ ສົ່ງໃຫ້ກະຊວງການເງິນ ສຳເລັດກ່ອນວັນທີ 30 ເດືອນ ມິຖຸນາ;

3. ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ຂັ້ນທ້ອງຖິ່ນ ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແຜນງົບປະມານແຫ່ງລັດເບື້ອງຕົ້ນ ສົ່ງໃຫ້ກະຊວງການເງິນ ກ່ອນວັນທີ 30 ເດືອນ ມິຖຸນາ;

4. ກະຊວງການເງິນ ຄົ້ນຄວ້າ, ວິໄຈ, ສັງລວມ ແຜນງົບປະມານແຫ່ງລັດທົ່ວປະເທດ ເພື່ອນຳສະເໜີລັດຖະບານພິຈາລະນາ ພາຍໃນເດືອນກໍລະກົດ;

5. ລັດຖະບານ ຄົ້ນຄວ້າແຜນງົບປະມານແຫ່ງລັດ ແລ້ວສົ່ງຢ່າງເປັນທາງການໃຫ້ສະພາແຫ່ງຊາດ ຊາວວັນ ກ່ອນວັນເປີດກອງປະຊຸມສະໄໝສາມັນປະຈຳປີ ເທື່ອທີສອງ ຂອງສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ;

6. ລັດຖະມົນຕີກະຊວງການເງິນ ແຈ້ງເພດານງົບປະມານໃຫ້ທ້ອງຖິ່ນ ພາຍໃນ ສິບຫ້າວັນ ພາຍຫຼັງສະພາແຫ່ງຊາດຮັບຮອງເອົາ;

7. ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ຂັ້ນທ້ອງຖິ່ນ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດສັນແຜນງົບປະມານແຫ່ງລັດລະອຽດ ເພື່ອໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ສະເໜີຕໍ່ສະພາປະຊາຊົນຂັ້ນຂອງຕົນ ພິຈາລະນາຮັບຮອງ ແລ້ວສົ່ງໃຫ້ກະຊວງການເງິນ ສັງລວມ ກ່ອນວັນທີ 30 ເດືອນພະຈິກ;

8. ກະຊວງການເງິນ ສັງລວມແຜນງົບປະມານແຫ່ງລັດ ແລ້ວລາຍງານລັດຖະບານ.

## ໝວດທີ 2
## ການຮັບຮອງແຜນງົບປະມານແຫ່ງລັດ

### ມາດຕາ 57 ການພິຈາລະນາຮັບຮອງແຜນງົບປະມານແຫ່ງລັດ

ກອງປະຊຸມສະໄໝສາມັນປະຈຳປີ ເທື່ອທີສອງ ຂອງສະພາແຫ່ງຊາດ ພິຈາລະນາຮັບຮອງເອົາແຜນງົບປະມານແຫ່ງລັດ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້.

### ມາດຕາ 58 (ປັບປຸງ) ຂັ້ນຕອນການມອບແຜນງົບປະມານແຫ່ງລັດ

ຂັ້ນຕອນການມອບແຜນງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະບານ ຄົ້ນຄ້ວາ ພິຈາລະນາ ແຜນງົບປະມານແຫ່ງລັດລະອຽດປະຈຳປີ ແລະ ອອກດຳລັດວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳປີ ກ່ອນວັນທີ 15 ຂອງເດືອນພະຈິກ;

2. ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ແລະ ຄຳແນະນຳທາງດ້ານວິຊາການກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ກ່ອນວັນທີ 30 ຂອງເດືອນພະຈິກ;

3. ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ ສູນກາງ ແລະ ທ້ອງຖິ່ນ ມອບແຜນລາຍຮັບ ແລະ ລາຍຈ່າຍງົບປະມານ ໃຫ້ບັນດາກົມ, ຂະແໜງການ ແລະ ຫົວໜ່ວຍຕ່າງໆທີ່ຂຶ້ນກັບຕົນ, ພ້ອມກັນນັ້ນ ກໍແຈ້ງໃຫ້ຂະແໜງການການເງິນ ແລະ ຄັງເງິນແຫ່ງຊາດທີ່ຕິດຂັ້ນກັບ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດລາຍຮັບ ແລະ ລາຍຈ່າຍງົບປະມານ ກ່ອນວັນທີ 20 ຂອງເດືອນທັນວາ.

ມາດຕາ 59 ການດັດແກ້ແຜນງົບປະມານແຫ່ງລັດ

ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ສາມາດປະຕິບັດໄດ້ ໜຶ່ງເທື່ອຕໍ່ປີງົບປະມານ ໃນກໍລະນີທີ່ມີ ລາຍຮັບເກີນ ຫຼື ຫຼຸດແຜນງົບປະມານ. ການປ່ຽນແປງນະໂຍບາຍ ຫຼື ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບຕໍ່ລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດປະຈຳປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້.

ການດັດແກ້ແຜນງົບປະມານແຫ່ງລັດປະຈຳປີ ໃຫ້ປະຕິບັດຄືກັນກັບຂັ້ນຕອນການພິຈາລະນາຮັບຮອງເອົາແຜນງົບປະມານແຫ່ງລັດປະຈຳປີ.

## ພາກທີ VI
## ການຈັດຕັ້ງປະຕິບັດ, ການບັນຊີ ແລະ ການສະຫຼຸບລາຍງານ ງົບປະມານແຫ່ງລັດ
### ໝວດທີ 1
### ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ

ມາດຕາ 60 (ປັບປຸງ) ການຈັດຕັ້ງເກັບລາຍຮັບ

ການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ມີ ດັ່ງນີ້:

1. ຂະແໜງການການເງິນ;
2. ບັນດາການຈັດຕັ້ງຂອງລັດ, ບັນດາກອງທຶນ, ອົງການບໍລິຫານວິຊາການ ທີ່ໄດ້ຮັບມອບສິດຈາກລັດຖະບານຕາມການສະເໜີຂອງກະຊວງການເງິນ.

ມາດຕາ 61 ຄວາມຮັບຜິດຊອບຂອງການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ

ການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ສ້າງແຜນເກັບລາຍຮັບ, ເກັບກຳຂໍ້ມູນສະຖິຕິຖານລາຍຮັບໃຫ້ຄົບຖ້ວນ, ຄິດໄລ່ໃຫ້ມີຄວາມຊັດເຈນ ແລະ ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ເປີດເຜີຍ;
2. ເຜີຍແຜ່, ແນະນຳ ກ່ຽວກັບບັນດານິຕິກຳຂອງຂະແໜງການການເງິນ ໃຫ້ບັນດາເປົ້າໝາຍທີ່ມີໜ້າທີ່ມອບພັນທະເຂົ້າງົບປະມານ, ເພີ່ມທະວີການຝຶກອົບຮົມທາງດ້ານວິຊາການ ເພື່ອຍົກລະດັບຄຸນນະພາບຂອງວຽກງານ ແລະ ຫຼຸດຜ່ອນຂັ້ນຕອນໃນການບໍລິຫານທີ່ມີຫຼາຍຂອດ;
3. ຈັດຕັ້ງ, ຄຸ້ມຄອງການເກັບລາຍຮັບສ່ວຍສາອາກອນ, ພາສີ, ລາຍຮັບຈາກຊັບສິນ, ຄ່າທຳນຽມ, ຄ່າບໍລິການ ແລະ ລາຍຮັບອື່ນ ໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ;
4. ເລັ່ງທວງ, ກ່າວເຕືອນ, ປັບໃໝ ເມື່ອພົບເຫັນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມອບລາຍຮັບເຂົ້າງົບປະມານບໍ່ຄົບຖ້ວນ, ຊັກຊ້າ ໂດຍບໍ່ມີເຫດຜົນພຽງພໍ ແລະ ສະເໜີໃຫ້ດຳເນີນຄະດີຕາມຂະບວນການຍຸຕິທຳ ຖ້າຫາກມີອົງປະກອບຂອງການກະທຳຜິດ.

ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງການຈັດຕັ້ງເກັບລາຍຮັບ ແມ່ນຢູ່ພາຍໃຕ້ການກວດກາຂອງອົງການກວດກາພາຍໃນ, ອົງການກວດກາພາຍນອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 86 ຂອງກົດໝາຍສະບັບນີ້ ແລະ ຄະນະສະເພາະກິດທີ່ຖືກແຕ່ງຕັ້ງ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ.

ມາດຕາ 62 ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ

ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງຢູ່ໃນແຜນງົບປະມານປະຈຳປີ;
2. ຕ້ອງໄດ້ຮັບການອະນຸມັດ;
3. ຕ້ອງໃຫ້ຖືກຕາມເປົ້າໝາຍລາຍຈ່າຍ;
4. ຕ້ອງຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍການໃຊ້ຈ່າຍ;
5. ຕ້ອງໄດ້ຮັບອະນຸຍາດຈາກຜູ້ສັ່ງການ ຫຼື ໄດ້ຮັບມອບສິດ.

ໃນກໍລະນີທີ່ສະພາແຫ່ງຊາດ ຍັງບໍ່ທັນໄດ້ຮັບຮອງເອົາແຜນງົບປະມານປະຈຳປີນັ້ນ ລັດຖະບານ ມີສິດອະນຸຍາດໃຫ້ຈ່າຍລ່ວງໜ້າໄດ້ເທົ່າກັບ ໜຶ່ງສ່ວນສິບສອງ ຂອງຍອດລາຍຈ່າຍທີ່ປະຕິບັດໃນປີຜ່ານມາ ເພື່ອຈ່າຍເງິນເດືອນ, ເງິນນະໂຍບາຍ, ລາຍຈ່າຍບໍລິຫານ ແລະ ລາຍຈ່າຍຊຳລະໜີ້ຕ່າງປະເທດ ທີ່ຮອດກຳນົດສັນຍາ.

ການເບີກຈ່າຍງົບປະມານ ຕ້ອງໃຫ້ຖືກຮ່ອງສາລະບານລາຍຈ່າຍທີ່ໄດ້ກຳນົດໃນແຜນການປີ, ການຈືດຈ່າຍໃຫ້ໄປຕາມສາລະບານງົບປະມານ ແລະ ການບັນຊີແຫ່ງລັດ.

ການຈັດຊື້, ການຈັດຈ້າງ, ການບໍລິການ ແລະ ການກໍ່ສ້າງ-ສ້ອມແປງ ດ້ວຍທຶນຂອງລັດ ຕ້ອງຜ່ານຂັ້ນຕອນ ແລະ ການປະມູນ ແລະ ປະກອບເອກະສານໃຫ້ຄົບຖ້ວນຕາມລະບຽບການ.

ການຈ່າຍງົບປະມານປີໃດ ຕ້ອງໄດ້ນຳໃຊ້ແຫຼ່ງລາຍຮັບງົບປະມານປີນັ້ນ ແຕ່ການຊຳລະ ສາມາດດຳເນີນໄປໄດ້ອີກສາມເດືອນ ພາຍຫຼັງປິດບັນຊີງົບປະມານໃນປີງົບປະມານ ເພື່ອໃຫ້ຄັງເງິນແຫ່ງຊາດ ສາມາດສະຫຼຸບຂາດຕົວເປັນແຕ່ລະປີ.

ການນຳໃຊ້ເງິນງົບປະມານແຫ່ງລັດ ເພື່ອຊຳລະລາຍຈ່າຍ ໃຫ້ປະຕິບັດຕາມຮູບການຕ່າງໆ ເຊັ່ນ ການໂອນບັນຊີ, ການຈ່າຍເປັນເງິນສົດ, ເປັນແຊັກ ແລະ ການເປີດຈົດໝາຍສິນເຊື່ອ.

ມາດຕາ 63 (ປັບປຸງ) ຄວາມຮັບຜິດຊອບຂອງ ຜູ້ສັ່ງການເອກ

ໃນວຽກງານງົບປະມານແຫ່ງລັດ ຜູ້ສັ່ງການເອກ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຊີ້ນຳ ການສ້າງ, ຈັດຕັ້ງປະຕິບັດ, ສະຫຼຸບ ແລະ ປະເມີນຜົນແຜນງົບປະມານແຫ່ງລັດປະຈຳປີ;
2. ແຈ້ງແຜນງົບປະມານແຫ່ງລັດປະຈຳປີ ໃຫ້ບັນດາການຈັດຕັ້ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ;
3. ຕົກລົງດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດຈາກພາກໜຶ່ງໄປໃສ່ພາກອື່ນທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຂອງຫົວໜ່ວຍງົບປະມານແຫ່ງລັດຂັ້ນໜຶ່ງ;
4. ສັ່ງການໃຫ້ການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ ສູນກາງ ແລະ ທ້ອງຖິ່ນ ແກ້ໄຂ ຫຼື ຍົກເລີກ ເມື່ອກວດກາເຫັນການເກັບລາຍຮັບ ແລະ ການປະຕິບັດລາຍຈ່າຍ ບໍ່ຖືກຕ້ອງຕາມກົດໝາຍ;
5. ອະນຸຍາດໃຫ້ເປີດບັນຊີເງິນຝາກຂອງຫົວໜ່ວຍງົບປະມານ;
6. ສັ່ງໂຈະ ຫຼື ຍົກເລີກການຈັດຊື້-ຈັດຈ້າງດ້ວຍງົບປະມານຂອງລັດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
7. ສັ່ງໂຈະ ຫຼື ຍົກເລີກຂໍ້ຕົກລົງກ່ຽວກັບງົບປະມານ ຂອງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
8. ສັ່ງໂຈະ ຫຼື ລຶບລ້າງ ບັນຊີເງິນຝາກຂອງຫົວໜ່ວຍງົບປະມານທີ່ເປີດບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
9. ສັ່ງມອບລາຍຮັບ ທີ່ຢູ່ນອກລະບົບ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ;

10. ອອກຄຳສັ່ງຈ່າຍເງິນໃນແຜນງົບປະມານແຫ່ງລັດປະຈຳປີ ຕາມຕົວເລກມອບໝາຍຂອງລັດຖະບານ;

11. ສັ່ງເຄື່ອນຍ້າຍເງິນງົບປະມານໃນລະບົບຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ;

12. ຕົກລົງສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍງົບປະມານແຫ່ງລັດຂັ້ນສອງ ທີ່ຂຶ້ນກັບບັນດາອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ;

13. ມອບສິດ ໃຫ້ບຸກຄົນອື່ນ ປະຕິບັດໜ້າທີ່ແທນຕົນ ໃນກໍລະນີຈຳເປັນ.

### ມາດຕາ 64 (ປັບປຸງ) ຄວາມຮັບຜິດຊອບຂອງຜູ້ສັ່ງການ

ໃນວຽກງານງົບປະມານແຫ່ງລັດ ຜູ້ສັ່ງການ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດທີ່ຕົນຮັບຜິດຊອບ;
2. ເກັບລາຍຮັບໃຫ້ຖືກຕ້ອງຕາມກົດໝາຍ, ຄົບຖ້ວນ, ທັນກຳນົດເວລາ, ເປີດເຜີຍ ແລະ ໂປ່ງໃສ;
3. ຕົກລົງດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດ ຈາກຮ່ອງໜຶ່ງໄປໃສ່ຮ່ອງອື່ນໃນພາກດຽວກັນທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ;
4. ສູ້ຊົນເກັບລາຍຮັບໃຫ້ໄດ້ຕາມແຜນການ ຫຼື ເກີນແຜນການ;
5. ປະຕິບັດລາຍຈ່າຍງົບປະມານແຫ່ງລັດ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ຕາມສາລະບານງົບປະມານ. ສຳລັບການສະເໜີຈ່າຍງົບປະມານນັ້ນ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ;
6. ຈົດກ່າຍຕາມກົດໝາຍວ່າດ້ວຍການບັນຊີ, ຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ.

### ມາດຕາ 65 (ປັບປຸງ) ຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດ

ໃນວຽກງານງົບປະມານແຫ່ງລັດ ຄັງເງິນແຫ່ງຊາດ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດແຜນງົບປະມານແຫ່ງລັດ, ຄຸ້ມຄອງ, ຕິດຕາມ, ຈົດກ່າຍ, ບັນທຶກລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ, ຮຽກເກັບລາຍຮັບເຂົ້າຄັງເງິນແຫ່ງຊາດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;
2. ແຍກປະເພດລາຍຮັບງົບປະມານແຫ່ງລັດທີ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຄຸ້ມຄອງເຂົ້າບັນຊີສູນກາງ ແລະ ບັນຊີທ້ອງຖິ່ນ ຕາມກົດໝາຍ;
3. ກວດກາທຸກຮ່ອງລາຍຈ່າຍງົບປະມານແຫ່ງລັດ ກ່ອນການເບີກຈ່າຍເງິນອອກຈາກຄັງເງິນ, ກວດກາຄວາມຖືກຕ້ອງຂອງເອກະສານສະເໜີຈ່າຍເງິນ;
4. ຄຸ້ມຄອງຄັງງົບປະມານແຫ່ງລັດ, ກອງທຶນ ຂອງລັດ, ຂອງອົງການບໍລິຫານວິຊາການ, ເງິນຊ່ວຍເຫຼືອລ້າ ແລະ ເງິນກູ້ຢືມ, ເງິນຝາກຂອງການຈັດຕັ້ງລັດ, ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ລວມທັງບັນຊີເງິນຝາກຂອງລັດວິສາຫະກິດ, ຂອງບຸກຄົນ ແລະ ການຈັດຕັ້ງ;
5. ເປີດບັນຊີເງິນຝາກຢູ່ທະນາຄານຕາມກົດໝາຍ, ລະບຽບການ ແລະ ຕາມການຕົກລົງຂອງລັດຖະບານ.

### ມາດຕາ 66 (ປັບປຸງ) ການບັນຊີ ແລະ ສາລະບານງົບປະມານແຫ່ງລັດ

ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດທັງໝົດ ຕ້ອງໄດ້ຈົດກ່າຍເປັນສະກຸນເງິນກີບ ແລະ ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ ແລະ ສາລະບານງົບປະມານ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ມາດຕາ 67 ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ

ການຄຸ້ມຄອງໜີ້ສິນພາຍໃນ ແລະ ຕ່າງປະເທດ ມີ ດັ່ງນີ້:

1. ລັດຖະບານ ຄຸ້ມຄອງໜີ້ສິນເປັນແຕ່ລະປີ, ຄວບຄຸມລະດັບໜີ້ສິນ ບົນພື້ນຖານ ການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ຖານະການເງິນຂອງປະເທດ ທີ່ສາມາດຊໍາລະຕົ້ນທຶນ ແລະ ດອກເບ້ຍ ແລະ ເປົ້າໝາຍການລົງທຶນທີ່ຈໍາເປັນ;

2. ລັດຖະບານ ບໍ່ອະນຸຍາດໃຫ້ບັນດາການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ສ້າງໜີ້ສິນຈາກການຈ່າຍນອກແຜນ ຫຼື ຈ່າຍເກີນແຜນງົບປະມານແຫ່ງລັດ;

3. ລັດຖະບານ ສັງລວມ ແລະ ຈັດສັນໜີ້ສິນ ເຂົ້າໃນແຜນງົບປະມານໄລຍະກາງ, ໄລຍະຍາວ ແລະ ແຜນງົບປະມານແຫ່ງລັດປະຈໍາປີ ເພື່ອຊໍາລະ.

ມາດຕາ 68 (ປັບປຸງ) ການກູ້ຢືມເງິນ

ການກູ້ຢືມເງິນ ມີຂຶ້ນເພື່ອດຸນດ່ຽງງົບປະມານແຫ່ງລັດປະຈໍາປີ.

ວິທີການກູ້ຢືມເງິນ ໃຫ້ປະຕິບັດ ດັ່ງນີ້:

1. ການກູ້ຢືມເງິນຈາກແຫຼ່ງພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ລວມສູນຢູ່ໃນແຜນງົບປະມານແຫ່ງລັດໄລຍະກາງ, ໄລຍະຍາວ ແລະ ແຜນງົບປະມານແຫ່ງລັດປະຈໍາປີ ໂດຍຈົດເຂົ້າໃນລະບົບບັນຊີຄັງເງິນແຫ່ງຊາດ;

2. ການກູ້ຢືມເງິນ ຕ້ອງຜ່ານປະຕູດຽວ ຢູ່ກະຊວງການເງິນ ຊຶ່ງເປັນເສນາທິການໃຫ້ລັດຖະບານໃນການຄຸ້ມຄອງ ແລະ ນໍາໃຊ້.

ໃນການຄຸ້ມຄອງການກູ້ຢືມເງິນນັ້ນ ກະຊວງການເງິນ ຕ້ອງໄດ້ຄົ້ນຄວ້າຄວາມອາດສາມາດໃຊ້ແທນທັງດອກເບ້ຍ ແລະ ຕົ້ນທຶນຄືນ ເພື່ອນໍາສະເໜີລັດຖະບານ.

ມາດຕາ 69 (ປັບປຸງ) ການຊ່ວຍເຫຼືອລ້າ

ການຊ່ວຍເຫຼືອລ້າ ໃຫ້ປະຕິບັດ ດັ່ງນີ້:

1. ລາຍຮັບຊ່ວຍເຫຼືອລ້າທັງໝົດຈາກພາຍໃນ ແລະ ຕ່າງປະເທດ ຕ້ອງຈົດ ຫຼື ມອບເຂົ້າງົບປະມານແຫ່ງລັດ ແລະ ເປີດບັນຊີຄຸ້ມຄອງໃນລະບົບຄັງເງິນແຫ່ງຊາດ;

2. ການຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ຕິດພັນກັບໂຄງການ ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງການຕ່າງປະເທດ ເປັນຜູ້ພົວພັນ ແລະ ເຈລະຈາກັບຜູ້ໃຫ້ທຶນດ້ວຍການເຂົ້າຮ່ວມຂອງ ການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

3. ການຊ່ວຍເຫຼືອລ້າຈາກພາຍໃນປະເທດ ອະນຸຍາດໃຫ້ການຈັດຕັ້ງຂອງລັດ, ການຈັດຕັ້ງອື່ນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ພົວພັນ ແລະ ເຈລະຈາໂດຍກົງກັບຜູ້ໃຫ້ທຶນ.

ມາດຕາ 70 ການດັດສະເລ່ຍລາຍຈ່າຍງົບປະມານແຫ່ງລັດ

ຜ່ານການຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ຫາກເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ໃຫ້ດັດສະເລ່ຍ ດັ່ງນີ້:

1. ປ່ຽນລາຍຈ່າຍງົບປະມານແຫ່ງລັດ ຈາກຮ່ວງໜຶ່ງໄປໃສ່ຮ່ວງອື່ນໃນພາກດຽວກັນ ທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈໍາປີ ຊຶ່ງຜູ້ສັ່ງການເປັນຜູ້ຕົກລົງ;

2. ປ່ຽນລາຍຈ່າຍງົບປະມານແຫ່ງລັດ ຈາກພາກໜຶ່ງໄປໃສ່ພາກອື່ນທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈໍາປີ ຊຶ່ງຜູ້ສັ່ງການເອກເປັນຜູ້ຕົກລົງ;

3. ປ່ຽນລາຍຈ່າຍງົບປະມານແຫ່ງລັດ ຈາກການຈັດຕັ້ງໜຶ່ງໄປໃສ່ການຈັດຕັ້ງອື່ນ, ຈາກທ້ອງຖິ່ນໜຶ່ງໄປໃສ່ທ້ອງຖິ່ນອື່ນ ທີ່ຢູ່ໃນແຜນງົບປະມານແຫ່ງລັດປະຈຳປີ ຊຶ່ງນາຍົກລັດຖະມົນຕີເປັນຜູ້ຕົກລົງ ແລ້ວລາຍງານຕໍ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

## ໝວດທີ 2
## ການບັນຊີ ແລະ ການສະຫຼຸບລາຍງານ ງົບປະມານແຫ່ງລັດ

### ມາດຕາ 71 (ປັບປຸງ) ການປິດ ແລະ ການສະຫຼຸບ ບັນຊີງົບປະມານແຫ່ງລັດ

ການຈັດຕັ້ງເກັບລາຍຮັບທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້ ແລະ ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງປິດ ແລະ ສະຫຼຸບບັນຊີຂອງຕົນຕາມກົດໝາຍ.

### ມາດຕາ 72 (ປັບປຸງ) ການປິດຮັບເອກະສານກ່ຽວກັບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ

ຄັງເງິນແຫ່ງຊາດ ເປັນຜູ້ປິດຮັບເອກະສານຂອງບັນດາການຈັດຕັ້ງທີ່ມີສິດສັ່ງມອບລາຍຮັບ ຮອດວັນທີ 31 ທັນວາ ແລະ ເອກະສານສະເໜີເບີກຈ່າຍງົບປະມານແຫ່ງລັດຂອງຜູ້ມີສິດສັ່ງຈ່າຍ ຊ້າສຸດວັນທີ 20 ທັນວາ.

### ມາດຕາ 73 (ປັບປຸງ) ກຳນົດເວລາສັງລວມ ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ

ການສະຫຼຸບສັງລວມລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:

1. ສະຫຼຸບສັງລວມລາຍຮັບທີ່ເກັບໄດ້ຕົວຈິງໃນປີງົບປະມານຈົນຮອດວັນທີ 31 ທັນວາ;
2. ສະຫຼຸບສັງລວມການເບີກຈ່າຍງົບປະມານແຫ່ງລັດຜ່ານມາ, ໃບຖອນເງິນ, ຄຳສັ່ງຈ່າຍທີ່ຄ້າງຈ່າຍຈົນຮອດວັນທີ 31 ທັນວາ ແລະ ດຳເນີນການຊຳລະລາຍຈ່າຍປະຈຳປີ ພາຍໃນ ເກົ້າສິບວັນ ຈົນຮອດວັນທີ 31 ມີນາ;
3. ລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດປີໃດ ຕ້ອງເປີດບັນຊີຕິດຕາມ ແລະ ສະຫຼຸບສະເພາະປີນັ້ນ.

### ມາດຕາ 74 (ປັບປຸງ) ກຳນົດເວລາລາຍງານສະພາບງົບປະມານ

ການລາຍງານສະພາບງົບປະມານໃຫ້ປະຕິບັດ ດັ່ງນີ້:

1. ພາຍໃນຊາວວັນ ນັບແຕ່ວັນປິດບັນຊີງົບປະມານໃນປີຄັງເງິນແຫ່ງຊາດ ຕ້ອງສະຫຼຸບສັງລວມລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ທີ່ໄດ້ປະຕິບັດຜ່ານມາ, ຍອດເງິນຄ້າງຄັງ, ໜີ້ຕ້ອງສົ່ງຕາມໃບສັ່ງຈ່າຍແລ້ວລາຍງານໃຫ້ກະຊວງການເງິນ;
2. ພາຍໃນສິບວັນ ນັບແຕ່ວັນໄດ້ຮັບລາຍງານຈາກຄັງເງິນແຫ່ງຊາດ ກະຊວງການເງິນຕ້ອງລາຍງານສະພາບການຈັດຕັ້ງປະຕິບັດງົບປະມານແຫ່ງລັດເບື້ອງຕົ້ນ ໃຫ້ລັດຖະບານ ເພື່ອພິຈາລະນາຕົກລົງການຊຳລະ ແລະ ສະຫຼຸບຂາດຕົວງົບປະມານແຫ່ງລັດປະຈຳປີ.

### ມາດຕາ 75 (ປັບປຸງ) ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ

ການປິດສະຫຼຸບຂາດຕົວງົບປະມານແຫ່ງລັດ ກຳນົດເອົາວັນທີ 31 ມີນາ. ຄັງເງິນແຫ່ງຊາດປະຈຳຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງສະຫຼຸບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດຂາດຕົວ ໂດຍປະສານສົມທົບກັບຫົວ

ໜ່ວຍງົບປະມານແຕ່ລະຂັ້ນ ເພື່ອລາຍງານໃຫ້ຂັ້ນເທິງຂອງຕົນ. ຕົວເລກສະຫຼຸບງົບປະມານຂອງຫົວໜ່ວຍງົບປະມານນັ້ນຕ້ອງໄດ້ສົມທຽບ ແລະ ໄດ້ຮັບການຢັ້ງຢືນຈາກຄັງເງິນແຫ່ງຊາດ.

**ມາດຕາ 76 (ປັບປຸງ) ການສັງລວມ ລາຍງານ ສະຫຼຸບຂາດຕົວງົບປະມານແຫ່ງລັດ**

ການສັງລວມ ລາຍງານ ສະຫຼຸບຂາດຕົວງົບປະມານແຫ່ງລັດໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສັ່ງການ ຕ້ອງໄດ້ກວດກາ, ພິຈາລະນາຄວາມຖືກຕ້ອງຂອງບົດສະຫຼຸບ ລາຍງານງົບປະມານແຫ່ງລັດ ແລະ ສົ່ງໃຫ້ກະຊວງການເງິນ ຢ່າງຊ້າບໍ່ໃຫ້ກາຍວັນທີ 30 ເມສາ;

2. ກະຊວງການເງິນ ຕ້ອງສັງລວມການສະຫຼຸບງົບປະມານແຫ່ງລັດປະຈຳປີ ແລ້ວສະເໜີໃຫ້ລັດຖະບານຄົ້ນຄວ້າ ແລະ ພິຈາລະນາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ ກ່ອນວັນທີ 30 ມິຖຸນາ;

3. ລັດຖະບານ ສົ່ງບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ ຢ່າງເປັນທາງການ ໃຫ້ສະພາແຫ່ງຊາດ ສິບຫ້າວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ ສະໄໝສາມັນປະຈຳປີເທື່ອທີສອງ ພາຍຫຼັງອົງການກວດສອບແຫ່ງລັດ ໄດ້ກວດສອບ ແລະ ຢັ້ງຢືນແລ້ວ.

**ມາດຕາ 77 (ປັບປຸງ) ການພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວງົບປະມານແຫ່ງລັດ**

ການພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປີຜ່ານມາຂອງການຈັດຕັ້ງລັດຈຳນວນໜຶ່ງ ຢູ່ຂັ້ນສູນກາງ;

2. ກອງປະຊຸມສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີຂອງທ້ອງຖິ່ນຕົນ.

ຜ່ານການຄົ້ນຄວ້າພິຈາລະນາຕົວເລກລາຍຮັບ, ລາຍຈ່າຍ, ແຫຼ່ງດຸນດ່ຽງ ແລະ ບັນຊີໜີ້ສິນຖ້າຫາກເຫັນວ່າການຈັດຕັ້ງປະຕິບັດບໍ່ຖືກຕາມແຜນງົບປະມານທີ່ໄດ້ຮັບຮອງເອົາແລ້ວ ສະພາແຫ່ງຊາດມີສິດກວດກາຄືນຄວາມຮັບຜິດຊອບຂອງລັດຖະບານ, ຜູ້ສັ່ງການເອກ, ຜູ້ສັ່ງການ ແລະ ຫົວໜ່ວຍງົບປະມານແຕ່ລະຂັ້ນ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 78 (ໃໝ່) ຂໍ້ຫ້າມ ສຳລັບຜູ້ສັ່ງການເອກ ແລະ ຜູ້ສັ່ງການ**

ຫ້າມ ຜູ້ສັ່ງການເອກ ແລະ ຜູ້ສັ່ງການ ມີ ພຶດຕິກຳ ດັ່ງນີ້:

1. ສັ່ງຈ່າຍງົບປະມານບໍ່ຖືກຕ້ອງກັບເນື້ອໃນລາຍຈ່າຍທີ່ໄດ້ກຳນົດໄວ້ໃນແຜນການປີ ແລະ ຕາມກົດໝາຍ;

2. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານງົບປະມານແຫ່ງລັດ ທີ່ຂັດກັບກົດໝາຍ ເປັນຕົ້ນ ການສ້າງໂຄງການນອກແຜນ, ການຈ່າຍນອກແຜນ, ການຈ່າຍເກີນແຜນ ແລະ ການລົງທຶນກ່ອນ;

3. ມີຫຸ້ນ, ຮຸ້ນ, ຜົນປະໂຫຍດດ້ານການເງິນ ຫຼື ການພົວພັນດ້ານຜົນປະໂຫຍດອື່ນ ຂອງບຸກຄົນສ່ວນຕົວ ທີ່ຕິດພັນກັບຄວາມຮັບຜິດຊອບ ແລະ ສິດ ໃນການຕົກລົງຂອງຕົນ;

4. ແຕ່ງຕັ້ງ ຜົວ ຫຼື ເມຍ ຫຼື ລູກ ຫຼື ຍາດໃກ້ຊິດ ເຂົ້າດຳລົງຕຳແໜ່ງ ເປັນນາຍຄັງ, ນາຍບັນຊີ-ການເງິນ ຢູ່ບ່ອນການຈັດຕັ້ງທີ່ຕົນຮັບຜິດຊອບ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 79 (ໃໝ່) ຂໍ້ຫ້າມ ສຳລັບພະນັກງານການເງິນ**

ຫ້າມ ພະນັກງານການເງິນ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນການເງິນ ທີ່ເປັນຄວາມລັບຂອງ ບຸກຄົນ ແລະ ນິຕິບຸກຄົນ ທີ່ພົວພັນກັບງົບປະມານ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ, ບັງຄັບນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຂອງ ບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;

3. ກົດໜ່ວງ ຖ່ວງດຶງ, ປອມແປງ ເອກະສານ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

4. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍ ຊຶ່ງສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ;

5. ນຳໃຊ້ເງິນງົບປະມານຂອງລັດ ບໍ່ຖືກຕາມກົດໝາຍ ແລະ ລະບຽບການ ເຊັ່ນ ຝາກເງິນນອກລະບົບ, ນຳໃຊ້ບໍ່ຖືກເປົ້າໝາຍ ຫຼື ຫາລາຍໄດ້ໃນຮູບການອື່ນ;

6. ແນະນຳ ສິ່ງທີ່ຂັດກັບກົດໝາຍ ແລະ ລະບຽບການ, ໃຊ້ອາຈາ ແລະ ສະແດງທ່າທີບໍ່ສຸພາບ ຕໍ່ຜູ້ໃຊ້ບໍລິການ;

7. ແຕ່ງຕັ້ງ ຜົວ ຫຼື ເມຍ ຫຼື ລູກ ຫຼື ຍາດໃກ້ຊິດ ເຂົ້າດຳລົງຕຳແໜ່ງ ເປັນນາຍຄັງ, ນາຍບັນຊີ-ການເງິນ ຢູ່ບ່ອນການຈັດຕັ້ງທີ່ຕົນຮັບຜິດຊອບ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 80 (ໃໝ່) ຂໍ້ຫ້າມ ສຳລັບຫົວໜ່ວຍງົບປະມານ**

ຫ້າມ ຫົວໜ່ວຍງົບປະມານ ມີ ພຶດຕິກຳ ດັ່ງນີ້:

1. ປົກປິດລາຍຮັບ ທີ່ຕົນຄຸ້ມຄອງ, ເກັບລາຍຮັບງົບປະມານແຫ່ງລັດທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ບໍ່ມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ;

2. ເປີດບັນຊີຂອງຫົວໜ່ວຍງົບປະມານຕົນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ ຫຼື ຜູ້ຖືກມອບສິດ;

3. ຈ່າຍງົບປະມານບໍ່ຖືກຮ່ອງຕາມສາລະບານ, ຄິດໄລ່ບໍ່ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ ແລະ ນຳໃຊ້ງົບປະມານບໍ່ຖືກເປົ້າໝາຍ;

4. ດຳເນີນການປະມູນ, ຈັດຊື້-ຈັດຈ້າງ ດ້ວຍງົບປະມານຂອງລັດ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

5. ນຳໃຊ້ເງິນເກີນແຜນ ໃນປີງົບປະມານ;

6. ສ້າງ ແລະ ສະຫຼຸບ ແຜນງົບປະມານແຫ່ງລັດ ບໍ່ທັນຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ VIII
# ການຄຸ້ມຄອງ ແລະ ກວດກາ ງົບປະມານແຫ່ງລັດ
## ໝວດທີ 1
## ການຄຸ້ມຄອງງົບປະມານແຫ່ງລັດ

**ມາດຕາ 81 (ປັບປຸງ) ອົງການຄຸ້ມຄອງງົບປະມານແຫ່ງລັດ**

ລັດຖະບານ ຄຸ້ມຄອງວຽກງານງົບປະມານແຫ່ງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງງົບປະມານແຫ່ງລັດ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນແຂວງ, ນະຄອນຫຼວງ;
3. ຫ້ອງການການເງິນເມືອງ, ເທດສະບານ, ນະຄອນ.

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງນະໂຍບາຍການເງິນ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ, ເພື່ອສະເໜີລັດຖະບານພິຈາລະນາ;
2. ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳອື່ນໃນຂົງເຂດການເງິນ, ງົບປະມານ, ເພື່ອສະເໜີລັດຖະບານພິຈາລະນາ;
3. ໂຄສະນາ ເຜີຍແຜ່ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບຂະແໜງການການເງິນ ໃຫ້ພາກສ່ວນທີ່ກ່ຽວຂ້ອງຢ່າງທົ່ວເຖິງ;
4. ຄຸ້ມຄອງດ້ານວິຊາການຕໍ່ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງພະນັກງານການເງິນ ຂອງທຸກຂັ້ນ ແລະ ທຸກຂະແໜງການ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ຂອງທຸກຂັ້ນ;
6. ຊີ້ນຳ, ນຳພາ, ອຳນວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນຂອງຂະແໜງການອື່ນ ແລະ ຂະແໜງການການເງິນ ທຸກຂັ້ນ;
7. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສ້າງບຸກຄະລາກອນ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານໃນຂະແໜງການການເງິນ;
8. ສ້າງແຜນຍຸດທະສາດພັດທະນາບຸກຄະລາກອນຂອງຂະແໜງການການເງິນ;
9. ພົວພັນ, ຮ່ວມມື ວຽກງານງົບປະມານແຫ່ງລັດ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ;
10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກການເງິນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ພະແນກການເງິນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍການເງິນ-ງົບປະມານແຫ່ງລັດ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ ແລະ ຈັດຕັ້ງປະຕິບັດ;
2. ປະກອບຄຳເຫັນຕໍ່ຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນໃນຂົງເຂດການເງິນ, ງົບປະມານ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານງົບປະມານຢ່າງທົ່ວເຖິງ;
4. ຄຸ້ມຄອງດ້ານວິຊາການຕໍ່ ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງ ພະນັກງານການເງິນ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ;
6. ຊີ້ນຳ, ນຳພາ, ອຳນວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນຂອງ ຂະແໜງການອື່ນ ແລະ ຂະແໜງການການເງິນ;
7. ຊີ້ນຳວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສະເໜີ ສ້າງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ບຸກຄະລາກອນ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ;
8. ສ້າງແຜນຍຸດທະສາດພັດທະນາບຸກຄະລາກອນຂອງຂະແໜງການການເງິນ;
9. ພົວພັນ, ຮ່ວມມື ວຽກງານງົບປະມານແຫ່ງລັດ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ;
10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ອົງການປົກຄອງຂັ້ນແຂວງ ແລະ ກະຊວງການເງິນ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 84 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການການເງິນ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ຫ້ອງການການເງິນ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍການເງິນ-ງົບປະມານແຫ່ງລັດ, ແຜນຍຸດທະສາດໄລຍະກາງ ແລະ ໄລຍະຍາວ;
2. ປະກອບຄຳເຫັນຕໍ່ຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນ ໃນຂົງເຂດການເງິນ, ງົບປະມານ;
3. ເຜີຍແຜ່ ນະໂຍບາຍການເງິນ, ແຜນຍຸດທະສາດ, ແຜນງົບປະມານ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານງົບປະມານຢ່າງທົ່ວເຖິງ;
4. ຄຸ້ມຄອງດ້ານວິຊາການຕໍ່ ວຽກງານງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ ລວມທັງ ພະນັກງານການເງິນ;
5. ຄຸ້ມຄອງບໍລິຫານ ແລະ ກວດກາການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ແລະ ການເງິນແຫ່ງລັດ;
6. ຊີ້ນຳ, ນຳພາ, ອຳນວຍຄວບຄຸມ ແລະ ຕິດຕາມການປະຕິບັດໜ້າທີ່ວຽກງານການເງິນ;

7. ຊີ້ນໍາວຽກງານວິຊາສະເພາະ, ຄຸ້ມຄອງ ແລະ ສະເໜີ ສ້າງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ, ປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ;

8. ສະເໜີແຜນການພັດທະນາບຸກຄະລາກອນ;

9. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານງົບປະມານແຫ່ງລັດ ຕໍ່ອົງການປົກຄອງຂັ້ນເມືອງ ແລະ ພະແນກການເງິນຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 85 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານງົບປະມານແຫ່ງລັດ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການການເງິນ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາ ງົບປະມານແຫ່ງລັດ

**ມາດຕາ 86 ອົງການກວດກາງົບປະມານແຫ່ງລັດ**

ອົງການກວດກາງົບປະມານແຫ່ງລັດ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງງົບປະມານແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 81 ຂອງກົດໝາຍສະບັບນີ້ ແລະ ອົງການກວດກາຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

2. ອົງການກວດກາພາຍນອກ ມີ ສະພາແຫ່ງຊາດ, ລັດຖະບານ, ຄະນະກໍາມະການກວດກາ, ອົງການກວດສອບແຫ່ງລັດ ແລະ ຄະນະກວດກາສະເພາະກິດ.

**ມາດຕາ 87 ເນື້ອໃນການກວດກາ**

ການກວດກາວຽກງານງົບປະມານແຫ່ງລັດ ມີ ເນື້ອໃນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບການເງິນ-ງົບປະມານ, ກວດກາການເກັບລາຍຮັບ, ການປະຕິບັດລາຍຈ່າຍ ຕາມແຜນງົບປະມານແຫ່ງລັດ;

2. ກວດກາການນໍາໃຊ້ສິດ ແລະ ຄວາມຮັບຜິດຊອບຂອງຜູ້ສັ່ງການເອກ, ຜູ້ສັ່ງການ, ຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານຂັ້ນຕ່າງໆ ແລະ ຂະແໜງການຄຸ້ມຄອງວຽກງານງົບປະມານ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານແຫ່ງລັດ;

3. ກວດກາຄວາມຮັບຜິດຊອບຂອງການຈັດຕັ້ງເກັບລາຍຮັບ ແລະ ອົງການຄຸ້ມຄອງງົບປະມານແຫ່ງລັດ ຕາມກົດໝາຍ.

ການກວດກາລາຍຈ່າຍງົບປະມານ ໃຫ້ປະຕິບັດສາມຂັ້ນຕອນ ຄື ການກວດກາກ່ອນຈ່າຍ, ການກວດກາຢູ່ໃນໄລຍະຈັດຕັ້ງປະຕິບັດ ແລະ ການກວດກາຫຼັງຈ່າຍ.

### ມາດຕາ 88 ຮູບການການກວດກາ

ການກວດກາວຽກງານງົບປະມານແຫ່ງລັດ ປະກອບດ້ວຍສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 89 ນະໂຍບາຍຕໍ່ຜູ້ມີຜົນງານ

ການຈັດຕັ້ງເກັບລາຍຮັບ, ຫົວໜ່ວຍງົບປະມານ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ ເປັນຕົ້ນ ຄຸ້ມຄອງການເກັບລາຍຮັບຢ່າງຖືກຕ້ອງ, ຄົບຖ້ວນ, ທັນກໍານົດເວລາ, ໄດ້ຕາມແຜນການ ຫຼື ເກີນແຜນການ, ຄຸ້ມຄອງລາຍຈ່າຍຖືກຕ້ອງ ຢ່າງເປີດເຜີຍ, ໂປ່ງໃສ, ປະຢັດ ແລະ ມີປະສິດທິຜົນຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ມອບພັນທະເຂົ້າງົບປະມານແຫ່ງລັດ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນກໍານົດເວລາ, ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການລະເມີດກົດໝາຍ ຊຶ່ງເຮັດໃຫ້ເຈົ້າໜ້າທີ່ ສາມາດເກັບລາຍຮັບໄດ້ເພີ່ມ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຢ່າງເໝາະສົມ.

### ມາດຕາ 90 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຫ້າມຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ເຊັ່ນ ມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ແລະ ດໍາເນີນຄະດີທາງອາຍາ ຕາມກົດໝາຍ ລວມທັງການໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 91 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງມີການກະທໍາທີ່ບໍ່ເປັນອັນຕະລາຍ ຫຼື ບໍ່ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ໃນກໍລະນີ ດັ່ງນີ້:

1. ການສ້າງແຜນ, ການສະຫຼຸບງົບປະມານປະຈໍາປີ ບໍ່ຊັດເຈນ ແລະ ບໍ່ທັນກໍານົດເວລາ;
2. ການສົມທົບກັບບຸກຄົນ, ນັກທຸລະກິດ ເພື່ອໃຫ້ແກ່ຍາວເວລາມອບ ຫຼື ບໍ່ໃຫ້ມອບພັນທະເຂົ້າງົບປະມານ;

3. ການອອກຄຳສັ່ງຈ່າຍບໍ່ຖືກເປົ້າໝາຍ, ບໍ່ຖືກເນື້ອໃນລາຍຈ່າຍທີ່ກຳນົດໄວ້ໃນແຜນການປີ, ຈ່າຍບໍ່ຖືກຮ່ອງ ຕາມສາລະບານງົບປະມານ, ຄິດໄລ່ບໍ່ຖືກຕ້ອງຕາມກຳນົດໝາຍໃຊ້ຈ່າຍ ໂດຍບໍ່ເຈດຕະນາ;

4. ການບໍ່ແຈ້ງຖານະການເງິນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ຢ່າງເປີດເຜີຍ, ໂປ່ງໃສ ແລະ ການຊຸກເຊື່ອງລາຍຮັບທີ່ຕົນຮັບຜິດຊອບ;

5. ການຕອບຄຳສະເໜີ, ການອະນຸມັດ, ການສັ່ງຈ່າຍເງິນ ໂດຍແກ່ຍາວເວລາ ແລະ ຮຽກຮ້ອງຄ່າຕອບແທນ;

6. ການເບີກຈ່າຍງົບປະມານບໍ່ມີຄວາມຍຸຕິທຳ;

7. ການສ້າງຄວາມຫຍຸ້ງຍາກ, ການໃຊ້ວາຈາ ແລະ ການສະແດງທ່າທີ່ບໍ່ສຸພາບ ແລະ ເໝາະສົມ ຕໍ່ຜູ້ໃຊ້ບໍລິການ;

8. ການລົງວິໄນຕໍ່ພະນັກງານບໍ່ເປັນທຳ.

## ມາດຕາ 92 (ໃໝ່) ມາດຕະການລົງວິໄນ

ພະນັກງານທີ່ໄດ້ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ເຊັ່ນ ການຍົກຍ້າຍໜ້າທີ່, ປົດຕຳແໜ່ງ ຫຼື ໄລ່ອອກຈາກລັດຖະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 93 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືກປັບໃໝ ຫາກມີການກະທຳໃນກໍລະນີ ດັ່ງນີ້:

1. ການສືບຕໍ່ລະເມີດການກະທຳທີ່ໄດ້ກຳນົດໄວ້ໃນມາດຕາ 91 ຂອງກົດໝາຍສະບັບນີ້;

2. ການບໍ່ແຈ້ງຂໍ້ມູນຫົວໜ່ວຍທຸລະກິດ, ການເກັບພັນທະບໍ່ຍຸຕິທຳ, ບໍ່ເປີດເຜີຍຂໍ້ມູນເກັບພັນທະ, ບໍ່ແກ້ໄຂການສະເໜີຂອງຫົວໜ່ວຍທຸລະກິດ;

3. ການເກັບລາຍຮັບຈາກຫົວໜ່ວຍທຸລະກິດ ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຕາມກົດໝາຍ ເຮັດໃຫ້ພັນທະມອບເຂົ້າງົບປະມານນັ້ນຫຼຸດລົງ;

4. ການບໍ່ປະຕິບັດຕາມພັດພັນຍັດທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ບໍ່ຖືບັນຊີ, ບໍ່ນຳໃຊ້ໃບເກັບເງິນ, ບໍ່ແຕ່ງຕັ້ງຫົວໜ້າການເງິນ, ບໍ່ແຕ່ງຕັ້ງນາຍຄັງເງິນສົດ, ບໍ່ປະກອບອຸປະກອນຮັບໃຊ້ຕາມມາດຕະຖານທຸລະກິດ, ບໍ່ແຈ້ງສະພາບການດຳເນີນທຸລະກິດ, ບໍ່ລາຍງານຖານະການເງິນປະຈຳເດືອນ, ງວດ ແລະ ປີ ໃຫ້ກະຊວງການເງິນ, ຂະແໜງການທີ່ກ່ຽວຂ້ອງ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 94 ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ກະທຳຜິດ ກ່ຽວກັບວຽກງານການເງິນ-ງົບປະມານ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ພ້ອມທັງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

# ພາກທີ X
# ບົດບັນຍັດສຸດທ້າຍ

**ມາດຕາ 95 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ02/ສພຊ ລົງວັນທີ 26 ທັນວາ 2006 ແລະ ສະບັບເລກທີ 01/ສພຊ ລົງວັນທີ 07 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້